vhs
DVV International

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Education for Everyone. Worldwide.
Lifelong.

ຈົດໝາຍຂ່າວ

# ການຮຽນຮູ້ຕະຫຼອດຊີວິດ & ການສຶກສານອກໂຮງຮຽນ
## ໃນ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້



ສະບັບທີ
No. 4 - 2018


ສະໜັບສະໜູນໂດຍ:
Federal Ministry
for Economic Cooperation
and Development

vhs
DVV International

Education for Everyone. Worldwide.
Lifelong.



ສະບາຍດີທ່ານຜູ້ອ່ານທີ່ຮັກແພງ

"ການຮຽນຮູ້ໜັງສື ແລະ ການພັດທະນາທັກສະ" ແມ່ນຫົວຂໍ້ຂອງ ວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື ໃນວັນທີ 8 ກັນຍາ ປີນີ້. ຢູ່ ສປປ ລາວເຮົາໄດ້ຈັດຕັ້ງພິທີສະເຫຼີມສະຫຼອງຂຶ້ນທີ່ ສູນພັດທະນາການສຶກສານອກໂຮງຮຽນ ຫຼັກ 8. ໃນພິທີສະເຫຼີມສະຫຼອງດັ່ງກ່າວ ບັນດາຜູ້ຕາງໜ້າຈາກກະຊວງສຶກສາທິການ ແລະ ກິລາ ແລະ ຢູເນສໂກ ໄດ້ເນັ້ນໜັກໃຫ້ເຫັນເຖິງຄວາມສຳຄັນຂອງການຮຽນຮູ້ໜັງສືເພື່ອການພັດທະນາ ແລະ ເນັ້ນໃຫ້ເຫັນເຖິງຄວາມສຳຄັນຂອງການສຶກສານອກໂຮງຮຽນເພື່ອການລຶບລ້າງຄວາມບໍ່ຮູ້ໜັງສື.

ໃນຂະນະດຽວກັນ, ພິທີການດັ່ງກ່າວນີ້ກໍໄດ້ສະທ້ອນໃຫ້ເຫັນຄວາມໝາຍຂອງການຮູ້ໜັງສືໃນສັດຕະວັດທີ XXI. ເຮົາຍັງເຫັນດີກັບຄຳນິຍາມຂອງການຮຽນຮູ້ໜັງສືຂອງຜູ້ໃຫຍ່ ທີ່ຢູເນສໂກ ນຳໃຊ້ໃນປື້ມປະມວນຄຳສັບຫຼືບໍ່?

"ເປີເຊັນຂອງປະຊາກອນທີ່ມີອາຍູ 15 ປີຂຶ້ນໄປ ທີ່ສາມາດອ່ານ-ຂຽນ ທີ່ສາມາດເຂົ້າໃຈປະໂຫຍກສັ້ນໆທີ່ນຳໃຊ້ໃນຊີວິດປະຈຳວັນ. ໂດຍທົ່ວໄປແລ້ວ 'ການຮູ້ໜັງສື' ນັ້ນຈະລວມເຖິງ 'ການຄິດໄລ່', ຄວາມສາມາດໃນການຄິດໄລ່ງ່າຍດາຍ. ຜູ້ໃຫຍ່ກືກໜັງສືໝາຍເຖິງເປີເຊັນຂອງປະຊາກອນອາຍຸ 15 ປີຂຶ້ນໄປທີ່ບໍ່ສາມາດ ອ່ານ-ຂຽນ ບໍ່ສາມາດເຂົ້າໃຈປະໂຫຍກສັ້ນທີ່ນຳໃຊ້ໃນຊີວິດປະຈຳວັນໄດ້".[1]

ຫຼື ເຮົາຄວນທຳຄວາມເຂົ້າໃຈກ່ຽວກັບຄວາມເປັນຈິງໃນສັດຕະວັດທີ XXI? ປ.ອ ລຳພູນ ຫຼວງໄຊ ຈາກ ກົມການສຶກສານອກໂຮງຮຽນ ໄດ້ເວົ້າວ່າ:

"ການຮູ້ໜັງສືໃນສັດຕະວັດທີ XXI ບໍ່ແມ່ນພຽງແຕ່ຄວາມສາມາດໃນການອ່ານ-ຂຽນ. ແຕ່ມັນແມ່ນຄວາມສາມາດທີ່ຈະເຂົ້າໃຈຄວາມໝາຍຂອງຄຳສັບ, ສັນຍາລັກ ແລະ ເຄື່ອງໝາຍ ທີ່ມີຄວາມໝາຍແຕກຕ່າງກັນເພື່ອບັນລຸຈຸດປະສົງທີ່ສະເພາະເຈາະຈົງໃດໜຶ່ງ".[2]

ອີກປະການໜຶ່ງ, ແທນທີ່ຈະໃຊ້ພຽງແຕ່ຄຳນິຍາມ (ທີ່ຫຼ້າຫຼັງ) ເຮົາຄວນເຊື່ອມໂຍງຄວາມເຂົ້າໃຈຂອງເຮົາກ່ຽວກັບການຮູ້ໜັງສືໃຫ້ກົງກັບຄວາມຕ້ອງການຂອງຜູ້ຮຽນ. ໃນຄວາມເປັນຈິງແລ້ວ ເຂົາເຈົ້າເຫັນວ່າມັນຈຳເປັນທີ່ຈະຕ້ອງຮູ້ວິທີການໃຊ້ໂທລະສັບ ຫຼື ການຄິດໄລ່ລາຄາ ຫຼາຍກວ່າທີ່ຈະເຂົ້າໃຈຄວາມໝາຍຂອງປະໂຫຍກໃດໜຶ່ງ.

ດັ່ງນັ້ນຈຶ່ງເຮັດໃຫ້ເກີດມີຄຳສັບໃໝ່ຄື "Functional Literacy" ໄດ້ຖືກພັດທະນາຂຶ້ນມາ. Functional Literacy ລວມມີ "ທັກສະການອ່ານ-ຂຽນ ເພື່ອສາມາດນຳໃຊ້ໃນດຳລົງຊີວິດແຕ່ລະວັນ ແລະ ສຳລັບການເຮັດວຽກແມ່ນຕ້ອງໃຊ້ທັກສະທີ່ສູງກວ່າຂັ້ນພື້ນຖານ".[3] ເຫັນໄດ້ວ່າ, ຄຳນິຍາມແມ່ນມີຄວາມຕ້ອງການຫຼາຍກວ່າ ແລະ ມັນກ່ຽວຂ້ອງກັບການຮູ້ໜັງສື ເຊິ່ງຂຶ້ນກັບຄວາມຕ້ອງການຂອງແຕ່ລະບຸກຄົນ. ດັ່ງນັ້ນແລ້ວ, ບໍ່ວ່າຈະຢູ່ໃນປະເທດທີ່ພັດທະນາແລ້ວກໍຍັງມີອັດຕາການກືກໜັງສືຢູ່ໃນລະຫວ່າງ 7-25% ຫຼື ອາດຈະຫຼາຍກວ່ານັ້ນ!

ທັງໝົດນີ້ມີຄວາມໝາຍແນວໃດກັບພວກເຮົາ? ສຳລັບຂ້າພະເຈົ້າມັນສະທ້ອນໃຫ້ເຫັນເຖິງ ແມ່ນຫຍັງທີ່ເປັນເນື້ອໃນທີ່ເໝາະສົມສຳລັບຜູ້ຮຽນຂອງພວກເຮົາ. ເພື່ອຕອບຄຳຖາມນີ້ໄດ້ ເຮົາຕ້ອງໄດ້ຖາມຜູ້ຮຽນ. ແລະ ພວກເຮົາຕ້ອງໄດ້ສັງເກດເຖິງການປ່ຽນແປງຂອງໂລກໃນສັດຕະວັດທີ XXI ໄປພ້ອມກັນ.

ດ້ວຍຄວາມຮັກແພງ
*ອູເວີ ກາກເຕີນສະແລເກີ*
ຜູ້ອຳນວຍການປະຈຳພາກພື້ນ

1 *http://uis.unesco.org/en/glossary-term/adult-literacy-rate*
2 *Quotation from: Lamphoune Luangxay: The village in the 21st century and literacy practices: in: Uwe Gartenschlaeger (Ed.): Rethinking Adult Education*
3 *https://en.wikipedia.org/wiki/Functional_illiteracy*

# ກອງປະຊຸມພາກພື້ນກ່ຽວກັບການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ໃນການສຶກສາເພື່ອພັດທະນາແບບຍືນຍົງ (ESD) ວັນທີ 10-14 ກັນຍາ ທີ່ເມືອງ ໂອກາຍາມະ ປະເທດຍີ່ປຸ່ນ

*ສົມສີ ສຸດທິວົງ, ສູນພັດທະນາການສຶກສານອກໂຮງຮຽນ(ສພນ)*



ທ່ານ ສົມສີ ສຸດທິວົງ
ຜູ້ອຳນວຍການ ສພນ

ກອງປະຊຸມພາກພື້ນກ່ຽວກັບການສົ່ງເສີມ ການມີສ່ວນຮ່ວມຂອງຊຸມຊົນ ການສຶກສາເພື່ອພັດທະນາແບບຍືນຍົງເພື່ອບັນລຸເປົ້າໝາຍການພັດທະນາແບບຍືງຍົງ ໄດ້ຈັດຂຶ້ນທີ່ເມືອງໂອກາຍາມາ ປະເທດຍີ່ປຸ່ນ ຊຶ່ງມີຜູເຂົ້າຮ່ວມ 40 ກວ່າຄົນ ຈາກ 15 ປະເທດ ໃນທະວີບເອເຊຍຊຶ່ງປະກອບມີ: ອັບການິສຖານ, ພູຖານ, ກຳປູເຈຍ, ສປປ ຈີນ, ເອຢິບ,ອິນເດຍ, ອິນໂດເນເຊຍ, ກາຊັກສະຖານ, ຍີ່ປຸ່ນ, ສປປ ລາວ, ມານດິຟ, ມົງໂກເລຍ, ຟີລິບປິນ, ເກົາຫລີໃຕ້ ແລະ ໄທ. ກອງປະຊຸມໄດ້ແລກປ່ຽນບົດຮຽນແລະປະສົບການດ້ານການສົ່ງເສີມການສຶກສາເພື່ອພັດທະນາແບບຍືນຍົງ (ESD), ທົບທວນຄືນຄູ່ມືສູນຮຽນຮູ້ຊຸມຊົນ ແລະ ແຫຼ່ງຂໍ້ມູນດ້ານການສຶກສາສຳລັບຄູ ລວມທັງແຜນການຕິດຕາມດຳເນີນວຽກງານຂອງປະເທດຕ່າງໆທີ່ເຂົ້າຮ່ວມ.

ກອງປະຊຸມໄດ້ດຳເນີນເປັນເວລາ 5 ວັນ ໂດຍການຈັດກອງປະຊຸມຮ່ວມຫຼາຍຝ່າຍຈາກອົງການຢູແນັດສະໂກພາກພື້ນບາງກອກ, ຢູແນັດສະໂກປັກກິ່ງ, ຢູແນັດສະໂກນິວເດລີ ຮ່ວມກັບມະຫາວິທະຍາໄລໂອກາຍາມາ, ເມືອງໂອກາຍາມາ ແລະ ອົງການ ACCU ພ້ອມການສະໜັບສະໜູນຈາກ ຄະນະກຳມາທິການແຫ່ງຊາດຍີ່ປຸ່ນເພື່ອອົງການຢູແນັດສະໂກ ແລະ ສູນຂໍ້ມູນຊັບພະຍາກອນດ້ານການສຶກສາເພື່ອພັດທະນາແບບຍືນຍົງ ປະເທດຍີ່ປຸ່ນ. ຜູ້ເຂົ້າຮ່ວມແຕ່ລະປະເທດແມ່ນມາຈາກກະຊວງສຶກສາທິການ ແລະ ສະຖາບັນການສຶກສາຕ່າງໆ ຈາກ 15 ປະເທດຊຶ່ງໄດ້ຮັບປະສົບການແລະບົດຮຽນຈາກອຳນາດການປົກຄອງເມືອງໂອກາຍາມາທີ່ເປັນເຈົ້າການແລະການມີສ່ວນຮ່ວມທີ່ເຂັ້ມແຂງຈາກຫລາຍພາກສ່ວນເປັນຕົ້ນສະຖາບັນການສຶກສາ,ພາກເອກະຊົນແລະຊຸມຊົນໃນທ້ອງຖິ່ນທີ່ໃຫ້ຄວາມສຳຄັນກັບ ເປົ້າໝາຍການພັດທະນາແບບຍືນຍົງ(SDGs) ພາຍໃຕ້ກົນໄກ ແລະ ຮູບແບບທີ່ມີຢູ່ຂອງການສຶກສາເພື່ອພັດທະນາແບບຍືນຍົງ.

ເມືອງ ໂອກາຍາມະ ໄດ້ພັດທະນາຮູບແບບໂຄງການ ທີ່ມີຜົນສຳເລັດ ເພື່ອສົ່ງເສີມສູນຮຽນຮູ້ຊຸມຊົນ(CLC), ໄດ້ຈັດຕັ້ງໃນທ້ອງຖິ່ນ ແລະ ມີສ່ວນຮ່ວມຈາກຫຼາຍພາກສ່ວນເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ(SDGs). ໃນປີ 2016 ໂຄງການ ESD ຂອງເມືອງໂອກາຍາມະ ໄດ້ຮັບລາງວັນຈາກອົງການ UNESCO ໃນການຮັບຮູ້ເຖິງຄວາມສຳເລັດໃນການຈັດຕັ້ງປະຕິບັດໂຄງການ ESD ໃນລະດັບທ້ອງຖິ່ນ. ໂຄງການນີ້ໄດ້ຮັບການຍອມຮັບເປັນເມືອງຕົ້ນແບບທີ່ຈັດຕັ້ງປະຕິບັດໂຄງການທີ່ມີຜົນສຳເລັດໂດຍການມີສ່ວນຮ່ວມຈາກໂຮງຮຽນ, ລັດຖະບານ, ບໍລິສັດ, ອົງການພັດທະນາເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມອື່ນໆ ໃນເມືອງໂອກາຍາມະ. ໂຄງການ ESD ໄດ້ເລີ່ມຈັດຕັ້ງປະຕິບັດໃນໂຮງຮຽນປະຖົມສຶກສາ ແລະ ໄດ້ຂະຫຍາຍໄປທຸກລະດັບຂອງການສຶກສາ ຊຶ່ງເຮັດໃຫ້ນັກຮຽນມີໂອກາດຫລາຍຂຶ້ນໃນການຢ້ຽມຢາມໄຮ່ນາໃນທ້ອງຖິ່ນ, ໄດ້ມີໂອກາດພົບປະກັບຜູ້ສູງອາຍຸທີ່ມີຄວາມຮູ້ສະເພາະດ້ານໃນທ້ອງຖິ່ນ, ມີສ່ວນຮ່ວມການປູກເຂົ້າ, ເຮັດວຽກກັບອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ອົງການຈັດຕັ້ງອື່ນໆ. ມະຫາວິທະຍາໄລ Okayama ໃນຖານະຜູ້ນຳໂຄງການ Okayama ESD ໄດ້ຮັບຕຳແໜ່ງປະທານຮ່ວມ ອົງການ UNESCO ໃນການສົ່ງເສີມໂຄງການ ESD ທີ່ໄດ້ພະຍາຍາມແລກປ່ຽນຄວາມຮູ້, ບົດຮຽນ ແລະ ປະສົບການທັງພາຍໃນແລະຕ່າງປະເທດ.



# ພິທີເປີດສູນການສຶກສາເພື່ອພັດທະນາຊຸມຊົນ ອາຊີຕາເວັນອອກສຽງໃຕ້ ທີ່ມະຫາວິທະຍາໄລແຫ່ງຊາດລາວ

*ໄຊຍະແສງ ຣັດຕະນະວົງ*, SEAMEO CED

ອົງການລັດຖະມົນຕີສຶກສາແຫ່ງອາຊີຕາເວັນອອກສ່ຽງໃຕ້ (SEAMEO) ແມ່ນອົງການສາກົນ ທີ່ສ້າງຕັ້ງຂຶ້ນໃນວັນທີ 30 ພະຈິກ ປີ 1965 ເພື່ອເປັນການສົ່ງເສີມການຮ່ວມມືດ້ານການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ໃນພາກພື້ນ.

ໃນນັ້ນມີປະເທດສະມາຊິກ 11 ປະເທດໄດ້ແກ່ ບຣູໄນດາຣູຊາລາມ, ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ, ຕີມໍ-ເລັດສະເຕ ແລະ ຫວຽດນາມ. ລວມທັງປະເທດສະມາຊິກຮ່ວມ ໄດ້ແກ່ ອົດສະຕຣາລີ, ການາດາ, ຝຣັ່ງ, ເຢຍລະມັນ, ເນເທີແລນ, ນິວຊີແລນ, ສະເປນ ແລະ ອັງກິດ ແລະ ຄູ່ຮ່ວມພັດທະນາ: ອົງການສາກົນດ້ານການສຶກສາທາງໄກ (ICDE), ມະຫາວິທະຍາໄລສຶກຸບະ (University of Tsukuba), ອົງການສາກົນເພື່ອສົ່ງເສີມການສຶກສາ (the British Council), ສະມາຄົມການສຶກສາຈີນເພື່ອການແລກປ່ຽນດ້ານການສຶກສາສາກົນ (China Education Association for International Exchange (CEAIE)) ແລະ ໂຄງການແລກປ່ຽນຄູໃນພາກພື້ນອາຊີ-ປາຊີຟິກ (UNESCO Asia-Pacific Centre of Education for International Understanding (APCEIU)).

ໃນໄລຍະ 5 ທົດສະວັດທີ່ຜ່ານມາ SEAMEO ໄດ້ພັດທະນາສະຖາບັນພິເສດ 26 ແຫ່ງ ໃນ 10 ປະເທດ ຂອງຈຳນວນສະມາຊິກທັງໝົດ 11 ປະເທດ ເຊິ່ງເປັນຜູ້ນຳໃນການສະໜອງການພັດທະນາຊັບພະຍາກອນມະນຸດໃນລະດັບພາກພື້ນ ແລະ ພວກເຂົາມີຄວາມຊ່ຽວຊານໃນຫຼາຍດ້ານ ເຊັ່ນ: ດ້ານສິ່ງແວດລ້ອມ, ກະສິກຳ ແລະ ລວມທັງຊັບພະຍາກອນທຳມະຊາດ. ເລີ່ມແຕ່ການສ້າງຕັ້ງ SEAMEO ບໍ່ແມ່ນພຽງແຕ່ເປັນອົງການລະຫວ່າງລັດຖະບານທີ່ເກົ່າແກ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ເທົ່ານັ້ນ ແຕ່ຍັງເປັນອົງການທີ່ໃຫຍ່ ແລະ ໃຫ້ບໍລິການດ້ານການພັດທະນາຊັບພະຍາກອນມະນຸດທີ່ຍາວນານທີ່ສຸດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້.

ໃນກອງປະຊຸມສະພາຂອງ SEAMEO ຫຼື SEAMEC ຄັ້ງທີ 49 ເຊິ່ງໄດ້ຈັດຂຶ້ນໃນວັນທີ 24-27 ກໍລະກົດ 2017 ທີ່ນະຄອນຫຼວງຈາກາຕາ ປະເທດອິນໂດເນເຊຍ ໄດ້ຕົກລົງໃຫ້ມີການສ້າງສູນຊີເມວໃນ ປະເທດກຳປູເຈຍ, ລາວ ແລະ ອິນໂດເນເຊຍ: ສູນພາກພື້ນສຳລັບການສຶກສາກ່ອນໄວຮຽນ ແລະ ການລ້ຽງເດັກ (SEAMEO CECCEP), ສູນການສຶກສາພາກພື້ນເພື່ອການພັດທະນາຊຸມຊົນ (SEAMEO CED) ແລະ ສູນການສຶກສາພາກພື້ນເພື່ອການພັດທະນາເຕັກນິກ (SEAMEO TED). ຄາດການວ່າການຈັດຕັ້ງສູນໃໝ່ທັງສາມແຫ່ງນີ້ຈະຊ່ວຍຈະຊ່ວຍເລັ່ງໃຫ້ເກີດຄວາມຄືບໜ້າຂອງວຽກງານການສຶກສາທີ່ມີຄຸນນະພາບສຳລັບທຸກຄົນໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້.

ໜຶ່ງປີຫຼັງຈາກນັ້ນ ໃນວັນທີ 30 ກໍລະກົດ 2018 ໄດ້ມີພິທີເປີດໂຕ ສູນການສຶກສາພາກພື້ນເພື່ອພັດທະນາຊຸມຊົນ ຂຶ້ນຢ່າງເປັນທາງການທີ່ຫ້ອງການ SEAMEO CED, ທີ່ນະຄອນຫຼວງວຽງຈັນ, ສປປ ລາວ. ໃນພິທີດັ່ງກ່າວເປັນປະທານໂດຍ ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແລະ ທ່ານ ດຣ. Gatot Hari Priowirjanto, ຜູ້ອຳນວຍການສຳນັກງານເລຂາທິການ SEAMEO, ລວມທັງບັນດາແຂກຈາກຄະນະບໍລິຫານງານ ຂອງ SEAMEO CED, ບັນດາການນຳຈາກກະຊວງ, ພາກເອກະຊົນ ແລະ ຄູ່ຮ່ວມພັດທະນາສາກົນ. ໃນນາມຕາງໜ້າຂອງລັດຖະບານລາວ ແລະ ປະຊາຊົນລາວ ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ ໄດ້ສະແດງຄວາມຮູ້ສຶກເປັນກຽດ ແລະ ພາກພູມໃຈທີ່ໄດ້ມີສູນພາກພື້ນ SEAMEO ໃນ ສປປ ລາວ ແລະ ສະແດງຄວາມຂອບໃຈມາຍັງບັນດາປະເທດສະມາຊິກ SEAMEO, ຄູ່ຮ່ວມງານ ແລະ ອົງການຕ່າງໆ ທີ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນໃນການສ້າງສູນ SEAMEO ແຫ່ງທຳອິດໃນ ສປປ ລາວ. ທ່ານ ຫວັງຢ່າງຍິ່ງວ່າສູນແຫ່ງນີ້ຈະປະກອບສ່ວນໃນການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນທ້ອງຖິ່ນ ໃນບັນດາປະເທດສະມາຊິກ ແລະ ເປັນສູນກາງຂອງຂໍ້ມູນການສຶກສາເພື່ອພັດທະນາຊຸມຊົນ ແລະ ເປັນສື່ກາງຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້. ທ່ານ ດຣ. Gatot Hari Priowirjanto ກ່າວຕື່ມວ່າ "ການສ້າງຕັ້ງ SEAMEO CED ເປັນບາດກ້າວທີ່ສຳຄັນຂອງ SEAMEO ທີ່ມີສູນໃນ ສປປ ລາວ ເຊິ່ງເປັນຊຸມຊົນທີ່ມີພົນລະເມືອງທີ່ມີຄວາມຫຼາກຫຼາຍຂອງຊົນເຜົ່າ. ການສ້າງຕັ້ງ SEAMEO CED ນີ້ເປັນນິມິດໝາຍອັນດີ ສຳລັບພາກພື້ນອາຊີຕາເວັນອອກສ່ຽງໃຕ້ ໂດຍສະເພາະ ສປປ ລາວ ເຊິ່ງປະຈຸບັນນີ້ໄດ້ມີສູນລະດັບພາກພື້ນ ເຊິ່ງຈະຊ່ວຍເສີມສ້າງຄວາມຮູ້ ແລະ ມີສ່ວນຮ່ວມໃນການສຶກສາ ເພື່ອພັດທະນາຊຸມຊົນໃນພາກພື້ນ".

SEAMEO CED ມີຈຸດປະສົງເພື່ອຕອບສະໜອງຄວາມຕ້ອງການໃນລະດັບພາກພື້ນໃນການສົ່ງເສີມ ແລະ ສະໜອງໂອກາດສຳລັບການຮ່ວມມືໃນດ້ານການສຶກສາຊຸມຊົນໃນບັນດາປະເທດສະມາຊິກ ແລະ ສະມາຊິກສົມທົບ. ຄວາມຄາດຫວັງຂອງພວກເຮົາແມ່ນການກ້າວເປັນສູນທີ່ມີ

ຄວາມເປັນເລີດໃນພາກພື້ນໃນດ້ານການຄົ້ນຄວ້າ ແລະ ຝຶກອົບຮົມກ່ຽວກັບການສຶກສາເພື່ອພັດທະນາຊຸມຊົນ, ໃຫ້ການສະໜັບສະໜູນເພື່ອເສີມສ້າງຄວາມສຳພັນ ແລະ ເພີ່ມທະວີຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ລະຫວ່າງຊຸມຊົນນັກວິໄຈດ້ານການສຶກສາ ແລະ ຜູ້ປະຕິບັດງານ ແລະ ຜູ້ວາງນະໂຍບາຍໃນພາກພື້ນ. ບົດບາດສຳຄັນຂອງ SEAMEO CED ມີດັ່ງນີ້:

1. ຈັດຝຶກອົບຮົມຫຼັກສູດ ກ່ຽວກັບໂພຊະນາການ, ສິ່ງແວດລ້ອມ ແລະ ພູມປັນຍາທ້ອງຖິ່ນສຳລັບປະເທດສະມາຊິກຂອງ SEAMEO;
2. ເຮັດການວິໄຈກ່ຽວກັບ ການສຶກສາເພື່ອພັດທະນາຊຸມຊົນ ໃນບັນດາປະເທດສະມາຊິກຂອງ SEAMEO ແລະ ໃນພາກພື້ນ ເພື່ອແກ້ໄຂບັນຫາກ່ຽວກັບໂພຊະນາການ, ສິ່ງແວດລ້ອມ ແລະ ພູມປັນຍາທອງຖິ່ນ;
3. ມີໜ້າທີ່ເປັນສູນຂໍ້ມູນສຳລັບລັດຖະບານຂອງປະເທດສະມາຊິກ SEAMEO ໃນຫົວຂໍ້ການວິໄຈກ່ຽວກັບການປະຕິຮູບການສຶກສາເພື່ອການພັດທະນາຊຸມຊົນ;
4. ໃຫ້ຄຳປຶກສາ ແລະ ບໍລິການກ່ຽວກັບການສຶກສາເພື່ອການພັດທະນາຊຸມຊົນ.

ການເປີດໂຕຢ່າງເປັນທາງການຂອງ SEAMEO CED ຕິດຕາມມາດ້ວຍການປະຊຸມຄະນະບໍລິຫານງານ ແລະ ກອງປະຊຸມສຳມະນາສາກົນໃນຫົວຂໍ້ "ການສຶກສາສຳລັບຊຸມຊົນໃນຊົນນະບົດ" ເລີ່ມແຕ່ວັນທີ 31 ກໍລະກົດ ເຖິງວັນທີ 3 ສິງຫາ 2018 ເຊິ່ງໄດ້ມີບັນດາຜູ້ກຳນົດນະໂຍບາຍ, ນັກວິໄຈ ແລະ ຜູ້ປະຕິບັດງານໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ໄດ້ມາຮ່ວມກັນແບ່ງປັນຂໍ້ມູນ, ປະສົບການ ແລະ ບົດຮຽນທີ່ດີເດັ່ນໃນການພັດທະນາ ການສຶກສາສຳລັບຊຸມຊົນໃນຊົນນະບົດ.



# ໂຄງການວິໄຈຮ່ວມລະຫວ່າງ ສພນ ແລະ ດີວີວີ ອິນເຕີເນເຊິນແນວ: ການສຶກສາກ່ຽວກັບສູນການຮຽນຮູ້ຊຸມຊົນໃນແຂວງພາກກາງຂອງ ສປປ ລາວ

*Raphaela Hess*, ດີວີວີ ອິນເຕີເນເຊິນແນວ & ວັນຄຳ ນວນພານິດ, ສພນ

ໃນລະຫວ່າງເດືອນທັນວາ ປີ 2017 ເຖິງ ເດືອນສິງຫາ ປີ 2018, ທີມງານນັກວິໄຈຈາກ ສພນ (ສູນພັດທະນາການສຶກສານອກໂຮງຮຽນ) ແລະ ດີວີວີ ອິນເຕີເນເຊິນແນວ ໄດ້ຮ່ວມກັນຈັດທຳການສຳຫຼວດ ສນຮ (ສູນການສຶກສານອກໂຮງຮຽນ) ຈຳນວນ 11 ແຫ່ງ ໃນຂັ້ນແຂວງ ແລະ ຂັ້ນເມືອງ ໃນ 5 ແຂວງຄື: ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ. ພາຍຫຼັງສິ້ນສຸດການສຳຫຼວດ ທີມງານນັກວິໄຈໄດ້ແລກປ່ຽນປະສົບການ ແລະ ຜົນຂອງການສຳຫຼວດດັ່ງນີ້.

## ຄວາມເປັນມາຂອໂຄງການ: ເປັນຫຍັງຈຶ່ງທຳການວິໄຈ?

ໂຄງການວິໄຈຄັ້ງນີ້ມີ 2 ຈຸດປະສົງຫຼັກ ຄື: ໜຶ່ງແມ່ນ ສພນ ຕ້ອງການສ້າງໃຫ້ເຫັນພາບລວມກ່ຽວກັບສະພາບການຂອງ ສນຮ ໃນຂັ້ນແຂວງ ແລະ ເມືອງ ເພື່ອລາຍງານແກ່ກົມການສຶກສານອກໂຮງຮຽນ, ສອງແມ່ນ ດີວີວີ ອິນເຕີເນເຊິນແນວ ມີຄວາມມຸ່ງໝັ້ນໃນການສ້າງຂີດຄວາມສາມາດຂອງບັນດາຜູ້ບໍລິຫານ ສນຮ. ເລີ່ມແຕ່ປີ 2018 ດີວີວີ ອິນເຕີເນເຊິນແນວ ໄດ້ນຳ




*ຮູບ 1: ແຜນທີ່ທຳການວິໄຈຂອງ ສພນ*



*ວັນຄຳ ນວນພານິດ*
ສພນ



*Raphaela Hess*
ດີວີວີ
ອິນເຕີເນເຊິນແນວ

ສະເໜີວົງຈອນການຝຶກອົບຮົມແບບໃໝ່ ເຊິ່ງລວມມີປະມານ 6 ພາກ ເພື່ອເປັນການເສີມສ້າງທັກສະໃນການບໍລິຫານ ສນຮ ໃຫ້ແກ່ບັນດາຜູ້ບໍລິຫານສູນ. ການວິໄຈນີ້ເປັນການປະເມີນຄວາມຕ້ອງການໃນການພັດທະນາວົງຈອນການຝຶກອົບຮົມ. ໂດຍລວມແລ້ວທັງສອງຝ່າຍລ້ວນແລ້ວແຕ່ມີຄວາມສົນໃຈໃນການເກັບຮວບຮວມຂໍ້ມູນວ່າເພື່ອຫາວິທີເຮັດໃຫ້ ສນຮ ມີຄວາມຍືນຍົງຂຶ້ນຕື່ມ. ພ້ອມດ້ວຍທັກສະການບໍລິຫານແບບ ໃໝ່ໆ, ດີວີວີ ຫວັງວ່າບັນດາຜູ້ອຳນວຍການສູນຈະສາມາດນຳພາສູນຂອງເຂົາເຈົ້າໃຫ້ເປັນສູນທີ່ສາມາດຄຸ້ມຄອງຕົນເອງໄດ້.

## ການຈັດຕັ້ງປະຕິບັດ: ແມ່ນໃຜ, ຢູ່ໃສ ແລະ ເຮັດຫຍັງ?

ເນື່ອງຈາກວ່າຈຸດປະສົງຫຼັກ ຂອງ ສພນ ແລະ ດີວີວີ ນັ້ນມີຄວາມກ່ຽວຂ້ອງກັນ ດັ່ງນັ້ນທັງສອງອົງກອນຈຶ່ງຕັດສິນທຳການວິໄຈຮ່ວມກັນ. ທັງສອງອົງກອນໄດ້ຮ່ວມກັນພັດທະນາແບບສອບຖາມ ລວມທັງການອອກແບບການວິໄຈ ແລະ ເຮັດການລົງເກັບກຳຂໍ້ມູນ. ທັງສອງທີມແມ່ນໄດ້ແຍກກັນທຳການວິເຄາະຂໍ້ມູນ ແລະ ການຂຽນບົດລາຍງານ ພ້ອມດຽວກັນນັ້ນກໍໄດ້ມີການປຶກສາຫາລື ແລະ ແລກປ່ຽນຜົນໄດ້ຮັບຮ່ວມກັນ. ນອກາກນັ້ນຍັງມີກອງປະຊຸມປຶກສາຫາລື ເພື່ອເປັນການສ້າງຂີດຄວາມອາດສາມາດສຳລັບທີມງານ ສພນ ໃນການວິໄຈ ແລະ ການວິເຄາະແຈກແຈງຂໍ້ມູນ.

ການວິໄຈຄັ້ງນີແມ່ນໄດ້ເນັ້ນໜັກໃນບັນດາແຂວງພາກກາງຂອງ ສປປ ລາວ ຄື: ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ. ລວມແລ້ວແມ່ນໄດ້ມີການວິໄຈ 5 ສນຮ ຂັ້ນແຂວງ ແລະ 6 ສນຮ ຂັ້ນເມືອງ, ລວມທັງການທົດສອບແບບສອບຖາມທີ່ເມືອງໂພນໂຮງ, ແຂວງວຽງຈັນ (ຮູບ 1). ເພື່ອໃຫ້ໄດ້ເຫັນສະພາບລວມກ່ຽວກັບຄວາມຕ້ອງການໃນການສ້າງຂີດຄວາມອາດສາມາດ ຂອງຜູ້ອຳນວຍການສູນ ສນຮ ບໍ່ພຽງແຕ່ສຳລັບຜູ້ອຳນວຍການສູນເທົ່ານັ້ນ ແຕ່ລວມທັງຄູສອນ, ຜູ້ເຂົ້າຮ່ວມຝຶກອົບຮົມ ແລະ ບັນດາຫ້ອງການສຶກສາແຂວງ ແລະ ຫ້ອງການສຶກສາເມືອງກໍໄດ້ຖືກສຳພາດ ເຊິ່ງທັງໝົດນັ້ນໄດ້ສຸມໃສ່ກ່ຽວກັບທັກສະຂອງຜູ້ອຳນວຍການສູນ.

## ຜົນໄດ້ຮັບ: ພົບຫົວຂໍ້ໃດແນ່ທີ່ສຳຄັນ ແລະ ຄຳແນະນຳ?

ພົບວ່າມີການຂອບເຂດການບໍລິຫານຂອງຜູ້ອຳນວຍການແມ່ນເຂົາເຈົ້າມີຄວາມຊຳນານ ແລະ ສາມາດປະຕິບັດໄດ້ເປັນຢ່າງດີ ແລະ ມີທັກສະຄວາມເປັນຜູ້ນຳທີ່ເປັນທີ່ຍອມຮັບຂອງບັນດາພະນັກງານ ແລະ ພາກສ່ວນກ່ຽວຂ້ອງ. ຜູ້ອຳນວຍການສູນຈຳນວນໜຶ່ງກໍໄດ້ມີແນວຄວາມຄິດລິເລີ່ມໃນຫຼາຍດ້ານເຊັ່ນ: ການສ້າງສື່ການຮຽນ-ການສອນສຳລັບສູນຂອງເຂົາເຈົ້າເອງ, ການຮ່ວມມືກັບໂຮງຮຽນໃນທ້ອງຖິ່ນ ແລະ ການວິໄຈຫຼັກສູດ ແລະ ພັດທະນາອຸປະກອນການຮຽນ-ການສອນ ທີ່ທັນສະໄໝ ທັງໃນຮູບແບບອອນໄລ ແລະ ສິ່ງພິມ. ສູນອື່ນກໍນຳໃຊ້ພະນັກງານການສື່ສານ ແລະ ປະຊາສຳພັນເພື່ອເຮັດໃຫ້ໂຄສະນາກິດຈະກຳ ແລະ ການຝຶກອົບຮົມມີປະສິດທິພາບຂຶ້ນ ເພື່ອເປັນການເພີ່ມຈຳນວນນັກຮຽນ. ຖ້າຜູ້ນຳນວຍການບໍ່ສາມາດນຳພາໄດ້ ວິທີການທີ່ສ້າງສັນເຫຼົ່ານີ້ຈະບໍ່ເກີດຂຶ້ນ. ບັນດາຜູ້ອຳນວຍການມີຮາກຖານຄວາມຮູ້ທີ່ເຂັ້ມແຂງເຊິ່ງສາມາດຕໍ່ຍອດຂຶ້ນຕື່ມໄດ້.

ໃນອີກທາງໜຶ່ງ, ຜູ້ອຳນວຍການ ສນຮ ກໍມີຄວາມຕ້ອງການໃນການຝຶກອົບຮົມວຽກງານຄຸ້ມຄອງໃນດ້ານຕ່າງໆ (ຮູບ 2). ເຂົາເຈົ້າໄດ້ສະແດງໃຫ້ເຫັນວ່າພວກເຂົາມີຄວາມຕ້ອງການເຂົ້າຮ່ວມຝຶກອົບຮົມ ເຊິ່ງມັນໄດ້ສະແດງອອກຢ່າງຊັດເຈນວ່າເຂົາເຈົ້ານັ້ນຕ້ອງການຍົກລະດັບຄວາມຮູ້ຄວາມສາມາດ. ໃນຮູບ 3 ແມ່ນຫົວຂໍ້ທີ່ບັນດາຜູ້ອຳນວຍການມີຄວາມຕ້ອງການການຝຶກອົບຮົມ. ການຈັດບູລິມະສິດຄວາມຕ້ອງການໃນການຝຶກອົບຮົມຂອງຄູສອນ ແລະ ພະນັກງານທ້ອງຖິ່ນສຳລັບຜູ້ອຳນວຍການແມ່ນມີຄວາມຄ້າຍຄືກັນ, ເຖິງແມ່ນວ່າໃນໄລຍະຜ່ານມາຈະຊອກຫາພຽງທຶນຈາກພາຍນອກເພື່ອຍົກລະດັບທັກສະ. ທັງໝົດນີ້ອາດກ່ຽວຂ້ອງກັບງົບປະມານ ແລະ ຊັບພະຍາກອນອື່ນໆ ທີ່ຍັງບໍ່ພຽງພໍ ໃນຂະແໜງ ກສນ. ກຸ່ມເປົ້າໝາຍຂອງການວິໄຈ ໄດ້ສະເໜີຄຳເຫັນກ່ຽວກັບຂໍ້ຈຳກັດດ້ານງົບປະມານລວມທັງດ້ານຊັບພະຍາກອນມະນຸດ, ຂາດອຸປະກອນສຳລັບການຝຶກອົບຮົມວິຊາຊີບ ແລະ ການຝຶກອົບຮົມທຽບເທົ່າ, ຂໍ້ຈຳກັດດ້ານການຄຸ້ມຄອງ, ຄວາມສາມາດໃນການສິດສອນຂອງບຸກຄະລາກອນ ສນຮ, ລະບົບການຕິດຕາມປະເມີນຜົນລວມທັງການປະເມີນຄວາມຕ້ອງການໃການຝຶກອົບຮົມ. ທີມງານນັກວິໄຈສະເໜີໃຫ້ມີການພິຈາລະນາຄືນບັນດາສິ່ງທີ່ໄດ້ກ່າວມາຂ້າງເທິງ.

ຜູ້ເຂົ້າຮ່ວມໃນການວິໄຈ ປະເມີນຄວາມຕ້ອງການ ໃນການຝຶກອົບຮົມ



ນອກນັ້ນ, ຍັງພົບວ່າການສື່ສານລະຫວ່າງ ສນຮ ແລະ ໜ່ວຍງານພາກລັດຍັງຕ້ອງໄດ້ຮັບການປັງປຸງ. ຂໍ້ມູນຂ່າວສານ ແລະ ຊັບພະຍາກອນຄວນມີການແບ່ງປັນໃຫ້ມີປະສິດທິພາບ. ຊ່ອງທາງການສື່ສານລະຫວ່າງ ສນຮ ແລະ ຊຸມຊົນຄວນມີການເປີດກວ້າງ ໂດຍສະເພາະໃນເຂດຊົນນະບົດ ຫ່າງໄກສອກຫຼີກ ເພື່ອສ້າງໃຫ້ປະຊາຊົນເກີດຄວາມເຂົ້າໃຈກ່ຽວກັບການສຶກສານອກໂຮງຮຽນ. ເພື່ອຈະໄດ້ຮູ້ເຖິງປະສົບການ ແລະ ຄວາມຮູ້ຂອງ ສນຮ ແຫ່ງອື່ນໆ ແລະ ສະຖາບັນ ຕ່າງໆ ທີ່ກ່ຽວຂ້ອງກັບ ກສນ. ທີມງານນັກວິໄຈໄດ້ສະເໜີໃຫ້ມີການສ້າງເຄືອຂ່າຍກັບບັນດາສະຖາບັນຕ່າງໆ. ພາກສ່ວນອື່ນໆ ນອກຈາກ ກສນ ຄວນມີສ່ວນຮ່ວມຫຼາຍຂຶ້ນ ເຊັ່ນ ຄວນມີການປະສານງານຮ່ວມກັນລະຫວ່າງສູນຝຶກອົບຮົມວິຊາຊີບ ແລະ ຫົວໜ່ວຍທຸລະກິດທ້ອງຖິ່ນໂດຍການສະເໜີໂອກາດໃຫ້ມີການຝຶກງານສຳລັບນັກຮຽນ ເຊິ່ງເປັນການພັດທະນາຄວາມຮູ້ ຄວາມສາມາດ ແລະ ປະສົບການຂອງນັກຮຽນ ແລະ ທັງເປັນການເພີ່ມໂອກາດໃນການຊອກວຽກເຮັດງານທຳພາຍຫຼັງຮຽນຈົບ. ທ້າຍສຸດ, ເນື່ອງຈາກຈຳນວນນັກຮຽນທີ່ເຂົ້າຝຶກອົບຮົມແມ່ນຫຼຸດລົງໃນເກືອບທຸກສູນທີ່ໄດ້ເຮັດການວິໄຈ ສະນັ້ນຈຶ່ງສະເໜີໃຫ້ເພີ່ມການປະຊາສຳພັນ ແລະ ການຕະຫຼາດ ເພື່ອໃຫ້ປະຊາຊົນເຂົ້າເຖິງຂໍ້ມູນຂ່າວສານຂອງ ສນຮ ໄດ້.

ຂໍ້ແນະນຳເພີ່ມເຕີມ: ພະນັກງານໃນຂັ້ນທ້ອງຖິ່ນສະໜັບສະໜູນຜູ້ອຳນວຍການສູນໃຫ້ໄດ້ຮັບການຝຶກອົບຮົມດ້ານການຄຸ້ມຄອງສູນ ດັ່ງທີ່ເຂົາເຈົ້າເຫັນໄດ້ວ່າມັນມີຄວາມຈຳເປັນ. ຄູສອນຍັງສະແດງໃຫ້ເຫັນວ່າເຂົາເຈົ້າສົນໃຈທີ່ຈະພັດທະນາຂີດຄວາມສາມາດຂອງເຂົາເຈົ້າເອງ. ຫຼາຍທ່ານສະແດງໃຫ້ເຫັນເຖິງຄວາມຄິດລິເລີ່ມ ແລະ ຄວາມຮັກຕໍ່ກັບວຽກງານຂອງເຂົາເຈົ້າ ເຊິ່ງທັງໝົດນີ້ເປັນແຮງຈູງໃຈໃນການພັດທະນາຄຸນນະພາບຂອງວຽກງານ ສນຮ. ຄູສອນໄດ້ສະເໜີຄວາມຄິດເຫັນຂອງເຂົາເຈົ້າວ່າພວກເຂົາ'ຕ້ອງການຊ່ວຍເຫຼືອ ແລະ ພັດທະນາສູນໃຫ້ດີຂຶ້ນ' ແລະ ພວກເຂົາເຈົ້າພູມໃຈທີ່ໄດ້ແບ່ງປັນຄວາມຮູ້ ແລະ ໄດ້ຊ່ວຍເຫຼືອຜູ້ຮຽນ. ຜູ້ເຂົ້າຮ່ວມສະແດງໃຫ້ເຫັນວ່າພວກເຂົາກະຕືລືລົ້ນທີ່ຈະຮຽນຮູ້ທັກສະໃໝ່, ມີກິດຈະກຳອີກຫຼາກຫຼາຍທີ່ສູນສາມາດສະໜອງໄດ້ໃນອະນາຄົດ ແລະ ວິທີການປັບປຸງສູນ ແລະ ຊ່ວຍເຫຼືອຊຸມຊົນຂອງພວກເຮົາ. ຜູ້ເຂົ້າຮ່ວມທ່ານໜຶ່ງໃຫ້ຄຳເຫັນວ່າ ພວກເຂົາຕ້ອງການຮຽນຮູ້ກ່ຽວກັບກະສິກຳປອດສານພິດ 'ມັນສຳຄັນຫຼາຍສຳລັບຊຸມຊົນຂອງພວກເຮົາເພື່ອເປັນການຮັກສາສຸຂະພາບຂອງປະຊາຊົນ ແລະ ດິນ'. ຫຼາຍຄົນເວົ້າວ່າເຂົາເຈົ້າເຂົ້າຮ່ວມຝຶກອົບຮົມວິຊາຊີບເພື່ອຮຽນຮູ້ທັກສະທີ່ຈຳເປັນສຳລັບຊຸມຊົນຂອງພວກເຂົາ.

ທີມງານນັກວິໄຈຂໍສະແດງຄວາມຂອບໃຈມາຍັງທຸກຄົນທີ່ກ່ຽວຂ້ອງໃນການລວບລວມຜົນການວິໄຈຄັ້ງນີ້ ແລະ ຂໍອວຍພອນໃຫ້ທຸກທ່ານປະສົບຜົນສຳເລັດໃນອະນາຄົດ ແລະ ໂຊກດີກັບການເຂົ້າຮ່ວມການຝຶກອົບຮົມວົງຈອນການບໍລິຫານ.

*ຄຳແນະນຳສຳລັບການພັດທະນາວົງຈອນການຝຶກອົບຮົມການບໍລິຫານ ສນຮ*

1. ທັກສະການວາງແຜນຍຸດທະສາດ ແລະ ການຄຸ້ມຄອງ
   - ➤ ທັກສະການວາງຜນຍຸດທະສາດ ສຳລັບການຄຸ້ມຄອງສູນ
     - ➤➤ ການບໍລິຫານການເງິນ ແລະ ງົບປະມານ
     - ➤➤ ທັກສະການບໍລິຫານຊັບພະຍາກອນມະນຸດ
     - ➤➤ ການສ້າງເອກະສານ
     - ➤➤ ການບໍລິຫານຊັບສິນຄົງທີ່
   - ➤ ທັກສະການວາງແຜນຍຸດທະສາດສຳລັບການຄຸ້ມຄອຫຼັກສູດ
     - ➤➤ ທັກສະການປະເມີນຄວາມຕ້ອງການກ່ອນການຝຶກອົບຮົມ
     - ➤➤ ການປັບປຸງຫຼັກສູດ ແລະ ອຸປະກອນຮັບໃຊ້ໃນຫຼັກສູດ
     - ➤➤ ກິດຈະກຳຕິດຕາມນັກຮຽນ
2. ເສີມສ້າງການສື່ສານພາຍໃນ
   - ➤ ການສື່ສານສະຫວ່າງຜູ້ອຳນວຍການ (ລະດັບບໍລິຫານ)
   - ➤ ການສືສານລະຫວ່າງຜູອຳນວຍການ ແລະ ຜູ້ປະຕິບັດງານ
3. ການຕິຕາມ ແລະ ປະເມີນຜົນ
4. ທັກສະການສ້າງເຄືອຂ່າຍ, ການລະດົມທຶນ ແລະ ການສະໜັບສະໜູນ
   - ➤ ການສ້າງເຄືອຂ່າຍກັບັນດາຂະແໜງການ ກສນ ພາກລັດ
   - ➤ ສ້າງເຄືອຂ່າຍກັບບັນດາພາກສ່ວນທີ່ກ່ງວຂ້ອງ
   - ➤ ສ້າງເຄືອຂ່າຍກັບບັນດາຊຸມຊົນທ້ອງຖິ່ນ
   - ➤ ວາງແຜນຍຸດທະສາດ ແລະ ເຄື່ອງມືສຳລັບການສື່ສານ

*ຮູບ 2: ຄຳແນະນຳໂດຍລວມສຳລັບການພັດທະນາວົງການຫານບໍລິຫານການຝຶກອົບຮົມ ຈາກທີມງານນັກວິໄຈ*




*ຮູບທີ 3: ຄວາມຕ້ອງການຝຶກອົບຮົມຂອງຜູ້ອຳນວຍການ*

# ປະສົບການໃນການເຂົ້າຮັບລາງວັນການສຶກສາຜູ້ໃຫຍ່ຂອງເອີຣົບ

*ສຸພາບ ຄູນວິໄຊ*, ສູນພັດທະນາການສຶກສານອກໂຮງຮຽນ



*ທ່ານ ສຸພາບ ຄູນວິໄຊ ສພນ*

ໃນຕອນບ່າຍທີກໂມງແລງຂອງປະເທດເອສໂຕເນຍ ຊຶ່ງຊ້າກວ່າ ຢູ່ລາວເຮົາປະມານ ສີ່ຊົ່ວໂມງ ແສງແດດສ່ອງຄືກັບວ່າເປັນການຕ້ອນຮັບການມາຢ້ຽມຢາມຂອງຊາຍ ແລະ ຍິງແປກໜ້າ ຫຼື ເປັນການ ສະແດງຄວາມຍິນດີກັບບາງສິ່ງບາງຢ່າງທີ່ກຳລັງຈະເກີດຂຶ້ນ. ຕາມການບອກເລົ່າຂອງເພື່ອນຕ່າງຊາດວ່າອາກາດຊ່ວງນີ້ດີຫລາຍ ເປັນລະດູຮ້ອນຂອງປະເທດນີ້ຊຶ່ງອຸນຫະພູມຢູ່ລະຫວ່າງ 15-21 ອົງສາເຊ. ມື້ນີ້ເປັນວັນທີ 27 ມິຖຸນາ 2018, ໃນລະຫວ່າງການຍ່າງຈາກຫ້ອງປະຊຸມຂອງໂຮງແຮມເຮສເຕຍຢູໂຣປາ (Hestia Hotel Europa) ໄປຫໍປະຈຳເມືອງ ທາລິນ (Tallinn Town Hall) ພວກເຮົາໄດ້ພົບກັບສະຖາປັດຕະຍະກຳສອງຟາກທາງທີ່ເປັນການປະສົມປະສານກັນລະຫວ່າງອາຄານທັນສະໄໝ ແລະ ສະຖາປັດຕະຍະກຳແບບລັດເຊຍ ຊຶ່ງມີກິ່ນອາຍຂອງເອີຣົບຕອນເໜືອ ແລະ ສະແກນດິນາວຽນປະປົນກັນ.

ໃນເວລາ 18:30 ເມື່ອຜູ້ແທນ ແລະ ແຂກຖືກເຊີນມາຮອດສະຖານທີ່ ການບັນເລັງເພັງທີ່ເປັນສັນຍາລັກຂອງຊາວເອສໂຕນຽນເລີ່ມ ຂຶ້ນຊຶ່ງມີພຽງແຊັກໄຊໂຟນ ແລະ ເປຍໂນ.

ຈາກນັ້ນພິທີທີ່ລຽບງ່າຍກໍເລີ່ມຂຶ້ນ ໂດຍການກ່າວນຳຂອງປະທານສະມາຄົມສະຫະພາບເອີຣົບເພື່ອການສຶກສາຜູ້ໃຫຍ່ທ່ານ ເປີ ປາລູດານ ຮານເຊັນ (Per Paludan Hansen). ສຳລັບປີນີ້ລາງວັນ EAEA Grundtvig Award ໄດ້ມອບໃຫ້ແກ່ 3 ໂຄງການຕາມເງື່ອນໄຂທຸກປີ ຄື: ໂຄງການທີ່ດຳເນີນການຢູ່ປະເທດເອສໂຕເນຍ ເພື່ອການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ໂດຍຜ່ານຊ່ອງທາງຂອງ ບັນດາອົງການຈັດຕັ້ງອາສາສະໝັກຕ່າງໆ ໃນການຕອບສະໜອງຂໍ້ມູນແຫ່ງການຮຽນຮູ້ ໃຫ້ຜູ້ໃຫຍ່ໃນທົ່ວປະເທດໄດ້ເຂົ້າເຖິງ ດຳເນີນການໂດຍອົງການ ANDRAS. ໂຄງການທີສອງແມ່ນໂຄງການທີ່ດຳເນີນໃນບັນດາ ປະເທດເອີຣົບ ຊຶ່ງຕົກເປັນຂອງສະມາຄົມ Associazione Agrado ຂອງປະເທດປອກຕຸຍການ ໃນການໃຫ້ການສຶກສາການ ນຳໃຊ້ສື່ດີຈິຕອນ



ຈາກຊ້າຍຫາຂວາຜູ້ໄດ້ຮັບລາງວັນປະເພດໂຄງການພາຍໃນປະເທດ, ປະເພດໂຄງການສາກົນ ດີວີວີ ອິນເຕີເນເຊີນແນວ ລາວ ແລະ ຜູ້ໄດ້ຮັບລາງວັນປະເພດພາກພື້ນເອີຣົບ

## ລາງວັນ Grundtvig ແມ່ນຫຍັງ?

**ໃນແຕ່ລະປີ EAEA ຈະມອບລາງວັນ ແລະ ສະເຫຼີມສະຫຼອງລາງວັນດີເດັ່ນດ້ານນະວັດຕະກໍາການສຶກສາຜູ້ໃຫຍ່. ລາງວັນ EAEA Grundtvig ແມ່ນໃຫ້ລາງວັນແກ່ໂຄງການທີ່ມີການສ້າງແນວຄວາມຄິດໃໝ່ໆ ຄູ່ຮ່ວມພັດທະນາໃໝ່, ວິທີການໃໝ່ ແລະ ຄວາມເຂົ້າໃຈໃໝ່ ກ່ຽວກັບການເຮັດວຽກໃນຂົງເຂດການສຶກສາຜູ້ໃຫຍ່.**

ທີ່ກ້າວໜ້າໃຫ້ແກ່ກຸ່ມຄົນທີ່ດ້ອຍໂອກາດໃນສັງຄົມ, ໂຄງການຍັງສ້າງຄວາມ ເຂັ້ມແຂງນັກການສຶກສາໂດຍການຮ່ວມມືກັບສະມາຄົມອື່ນຢູ່ເອີຣົບ ແລະ ນໍາໃຊ້ວິທີການສຶກສານອກໂຮງຮຽນ. ໂຄງການໄດ້ ສະແດງໃຫ້ເຫັນເຖິງການຮ່ວມມືຂອງຫຼາຍພາກສ່ວນ ເຊັ່ນ: ສະມາຄົມທີ່ບໍ່ຫວັງຜົນກໍາໄລ, ອົງການຮ່ວມມືທາງສັງຄົມ, ບໍລິສັດ, ແລະ ສະຖານກັກຂັງນັກໂທດ. ສ່ວນໂຄງການທີ່ໄດ້ຮັບຊະນະເລີດປະເພດໂຄງການສາກົນປີນີ້ເປັນໂຄງການຝຶກອົບຮົມຄູຝຶກການສຶກສາຜູ້ໃຫຍ່ ຊຶ່ງໄດ້ສ້າງຄູຝຶກ ໃນສາຍການສຶກສານອກໂຮງຮຽນ, ອົງການຈັດຕັ້ງມະຫາຊົນຊາວໜຸ່ມ, ແມ່ຍິງ, ຄະນະສຶກສາສາດ, ອາຊີວະ, ສູນຝຶກອົບຮົມ ແມ່ຍິງພິການ ແລະ ລວມທັງສະມາຄົມທີ່ບໍ່ຫວັງຜົນກໍາໄລ ຈໍານວນ 35 ຄົນ. ໂດຍມີການຮ່ວມມືກັນລະຫວ່າງບັນດາອົງການຈັດຕັ້ງທີ່ ຢູ່ພາກພື້ນອາຊີ-ປາຊີຟິກ ພາຍໃຕ້ການຈັດຕັ້ງປະຕິບັດໂຄງການ ຂອງກົມການສຶກສານອກໂຮງຮຽນ ກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ ແລະ ອົງການຮ່ວມມືນານາຊາດເພື່ອການສຶກສາຜູ້ໃຫຍ່ເຢຍລະມັນ ປະຈໍາອາຊີອາເວັນອອກສ່ຽງໃຕ້.

ຫົວໃຈສໍາຄັນທີ່ເຮັດໃຫ້ໂຄງການຝຶກອົບຮົມການສຶກສາຜູ້ໃຫຍ່ຖືກຍອມຮັບໃນລະດັບສາກົນນັ້ນ ໃນທັດສະນະຂອງຂ້າພະເຈົ້າ ແມ່ນມາຈາກຄວາມມຸ້ງໝັ້ນຂອງຜູ້ທີ່ມີສ່ວນຮ່ວມທຸກຝ່າຍທີ່ຈະເຮັດໃຫ້ໂຄງການນີ້ບໍ່ໃຫ້ມັນຕາຍໄປພ້ອມກັບໂຄງການສິ້ນສຸດ ຄວາມມຸ້ງໝັ້ນໃນການສ້າງບຸກຄະລາກອນນີ້ຈະເປັນບາດລ້ຽວອັນສໍາຄັນໃຫ້ການພັດທະນາທຸກຂົງເຂດໃຫ້ປະສົບຜົນສໍາເລັດ. ຄວາມມຸ້ງໝັ້ນທີ່ມາຈາກຕົວຜູ້ເຂົ້າຮ່ວມເອງທີ່ຈະປະຕິບັດພາລະກິດໃນແຕ່ລະກອງປະຊຸມ ແລະ ການຜັນຂະຫຍາຍສິ່ງເຫຼົ່ານີ້ໃນກົມກອງທີ່ຕົນຮັບຜິດຊອບ, ຄວາມມຸ້ງໝັ້ນຂອງຄູຝຶກທັງພາຍໃນ ແລະ ຕ່າງປະເທດ (ມະຫາວິທະຍາໄລໂຮໂຢເມວເບີນ-RMIT, ASPBEA, UNESCO BKK, ອາສາສະໝັກອິດສະຕາລີ, ອາສາສະໝັກເຢຍລະມັນ, ຄວາມມຸ້ງໝັ້ນຂອງອົງການ DVV International ໃນການຜັນຂະຫຍາຍເນື້ອໃນຂອງຫຼັກສູດການສຶກສາຜູ້ໃຫຍ່ສາກົນ ແລະ ທາງດ້ານງົບປະມານ ແລະ ສຸດທ້າຍແມ່ນຄວາມມຸ້ງໝັ້ນຂອງກົມການສຶກສານອກໂຮງຮຽນ ແລະ ສູນພັດທະນາການສຶກສານອກໂຮງຮຽນ ໃນການຊຸກຍູ້ທາງ ດ້ານນະໂຍບາຍ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ.

ລາງວັນດັ່ງກ່າວແມ່ນໄດ້ໃສ່ຊື່ຕາມຊື່ນັກປາດດ້ານການສຶກສາຄົນເດັ່ນມາກທ່ານ Nikolai Frederik Severin Grundtvig (1783-1872) ຊຶ່ງທ່ານໄດ້ມີອິດທິພົນຕໍ່ການສຶກສາຜູ້ໃຫຍ່ນອກໂຮງຮຽນໃນບັນດາປະເທດເອີຣົບ ແລະ ສາກົນ. ທ່ານໄດ້ສະເໜີວ່າ "ການສຶກສານອກໂຮງຮຽນຈະເປັນພື້ນຖານປັດສະຍາອັນໜັກແໜ້ນໃຫ້ແກ່ການຮຽນຮູ້ຕະຫຼອດຊີວິດ". ເພື່ອເປັນການສັນລະເສີນ ແລະ ລະນຶກເຖິງຜົນງານຂອງທ່ານ, ສະມາຄົມສະຫະພາບເອີຣົບເພື່ອການສຶກສາຜູ້ໃຫຍ່ຈຶ່ງໄດ້ຕັ້ງລາງ ວັນດັ່ງກ່າວແຕ່ປີ 2003 ແລະ ມອບໃຫ້ພາກສ່ວນ ທີ່ສົ່ງເສີມການສຶກສານອກໂຮງຮຽນ, ການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ຕະຫຼອດຊີວິດແຕ່ນັ້ນເປັນຕົ້ນມາ. ລາງວັນດັ່ງກ່າວໄດ້ເປັນການກະຕຸກຊຸກຍູ້ໃຫ້ທຸກພາກສ່ວນກະຕືລືລົ້ນໃນການປະກອບສ່ວນຄວາມຮູ້, ຄວາມສາມາດ, ບົດຮຽນ ແລະ ປະສົບການຂອງຕົນຢ່າງມີຫົວຄິດປະດິດສ້າງ ຄຽງຄູ່ກັບການສ້າງຄູ່ຮ່ວມງານ ແລະ ເຄືອຂ່າຍທີ່ມີເຂົ້າໃນວຽກງານການ ສຶກສານອກໂຮງຮຽນ, ການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ຕະຫຼອດຊີວິດ ໃນທົ່ວໂລກໃຫ້ນັບມື້ນັບກວ້າງແລະເລິກຂຶ້ນເປັນກ້າວໆ. ໃນນາມຕາງໜ້າໃຫ້ແກ່ກົມການສຶກສານອກ ໂຮງຮຽນ, ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ອົບອຸ່ນພາຍໃຕ້ ການຈັດງານຂອງເຈົ້າພາບ ທີ່ລຽບງ່າຍແຕ່ເຕັມໄປດ້ວຍ ຄວາມໝາຍ ຊຶ່ງສະແດງອອກຜ່ານສາຍຕາຂອງບັນດາ ສະມາຊິກຕົວແທນຂອງອົງການການສຶກສາຜູ້ໃຫຍ່ ໃນ ປະເທດເອີຣົບ ຫຼາຍກວ່າ 50 ຊີວິດ.



ລາງວັນດັ່ງກ່າວມັນໄດ້ ເຮັດໃຫ້ຂ້າພະເຈົ້າລະນຶກເຖິງການທຸ່ມເທຂອງທີມງານຄູຝຶກ ແລະ ຜູ້ເຂົ້າຮ່ວມທີ່ໄດ້ເຮັດວຽກຮ່ວມກັນຢ່າງບໍ່ຮູ້ອິດຮູ້ເມື່ອຍ ໃນແຕ່ລະວາລະກອງປະຊຸມ ແລະ ການ ນໍາເອົາປະສົບການ ນັ້ນໄປຜັນຂະຫຍາຍ ແລະ ບູລະນາການເຂົ້າໃນຂອບເຂດ ວຽກງານທີ່ແຕ່ລະຄົນຮັບຜິດຊອບ. ພ້ອມດຽວກັນນັ້ນ ມັນຍັງເຮັດໃຫ້ພວກເຮົາຕ້ອງເບິ່ງໄປຂ້າງໜ້າວ່າເຮົາຈະມີນະໂຍບາຍ, ໂຄງການ ຫຼື ກິດຈະກໍາການສຶກສານອກໂຮງຮຽນ ແລະ ການສຶກສາຜູ້ໃຫຍ່ ໃດແດ່ ທີ່ຈະແທດເໝາະກັບສະພາບສັງຄົມບໍລິບົດຂອງບ້ານເຮົາໃນຊຸມປີຕໍ່ໜ້າ.

ໂດຍສະເພາະພາຍຫລັງທີ່ເຮົາປະກາດຈົບຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນໄປແລ້ວ ເພື່ອເປັນການຮັບປະກັນວ່າຊາວໜຸ່ມ ແລະ ຜູ້ໃຫຍ່ເຫລົ່ານັ້ນ ລວມທັງຜູ້ທີ່ຕົກຫຼົ່ນຜ່ານມາຈະສືບຕໍ່ພັດທະນາຄຸນນະພາບຊີວິດຂອງຕົນເອງ ຜ່ານຊ່ອງທາງການຮຽນຮູ້, ທັກສະຊີວິດ ແລະ ວິຊາຊີບທີ່ຫຼາກຫຼາຍ. ອີກເທື່ອໜຶ່ງ ບຸກຄະລາກອນທີ່ໄດ້ສ້າງຜ່ານໂຄງການການຝຶກອົບຮົມຄູຝຶກ ການສຶກສາຜູ້ໃຫຍ່ຈະເປັນກໍາລັງແຮງທີ່ເຂັ້ມແຂງໃຫ້ກົນໄກດັ່ງກ່າວ ໄດ້ຢ່າງມີປະສິດທິພາບ. ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຖືກຂັບເຄື່ອນໄປຂ້າງໜ້າໃນຈັງຫວະການປັ່ນທີ່ຕັ້ງໜ້າ ແລະ ມີຈຸດສຸມນັ້ນ, ມັນຮຽກຮ້ອງໃຫ້ເພື່ອນມິດຍຸດທະສາດ, ອົງການຈັດຕັ້ງສາກົນຕ້ອງໄດ້ສືບຕໍ່ໃຫ້ການຊ່ວຍເຫລືອທາງດ້ານທຶນຮອນ, ແລກປ່ຽນປະສົບການ ແລະ ຖ່າຍທອດເຕັກວິທະຍາສາດທີ່ກ້າວໜ້າໃຫ້ແກ່ວຽກງານການສຶກສານອກໂຮງຮຽນ ແຕ່ສ່ວນກາງຈົນຮອດທ້ອງຖິ່ນໃຫ້ຫລາຍຂຶ້ນ. ໃນສ່ວນຂອງການສຶກສານອກໂຮງຮຽນເອງ ກໍ່ຕ້ອງມີການແບ່ງຂັ້ນຄຸ້ມຄອງທີ່ຈະແຈ້ງ ເຮັດໃຫ້ວຽກງານການສຶກສາຕະຫຼອດຊີວິດ ເປັນຂອງອໍານາດການປົກຄອງທ້ອງຖິ່ນໃຫ້ຫຼາຍ.



ສະມາຊິກຂອງໂຄງການຝຶກອົບຮົມຄູຝຶກ (ToMT) ແລະ ບັນດາຜູ້ຊ່ຽວຊານທັງຈາກພາຍໃນ ແລະ ສາກົນ.

# ສູນການຮຽນຮູ້ເພື່ອສັນຕິພາບຊຸມຊົນໃນກໍາປູເຈຍ: ສ້າງພື້ນທີ່ສໍາລັບຄວາມຊົງຈໍາ ແລະ ການປົວແປງ

*ເກດ ລອງ*, ສະຖາບັນເພື່ອສັນຕິພາບ, ກໍາປູເຈຍ

*ຈຸດປະສົງຂອງການຄວາມຄິດລິເລີ່ມນີ້ແມ່ນເພື່ອຊີ້ໃຫ້ເຫັນຄວາມຈໍາເປັນໃນການເລົ່າຄວາມຈິງ ລວມເຖິງການຊອກຫາຄວາມຍຸດຕິທໍາ ແລະ ສ້າງວັດທະນະທໍາແຫ່ງປະຊາທິປະໄຕ. ໄນດູ (Naidu 2006) ໄດ້ສະເໜີແນວຄວາມຄິດຫຼັກຂອງໂຄງການອະນຸສອນສະຖານ ເພື່ອເປັນການລະລຶກເຖິງປະຫວັດສາດກ່ອນໜ້ານີ້ ແລະ ມໍລະດົກ ລວມເຖິງການຮັບຮູ້ເຖິງຜູ້ທີ່ຕົກເປັນຜູ້ເຄາະຮ້າຍ ແລະ ຜູ້ລອດຊີວິດຈາກລະເມີດສິດທິມະນຸດ ແລະ ຜູ້ທີ່ຖືກຫຼຸດຄຸນຄ່າຄວາມເປັນມະນຸດຂອງຜູ້ຖືກເຄາະຮ້າຍ. ຍຸດທະສາດທີ່ໃຊ້ໃນຂະບວນການສ້າງອະນຸສອນສະຖານຄວນຮັບປະກັນວ່າໃຫ້ມີຄວາມເປັນເຈົ້າການ ແລະ ຍືນຍົງ. ແນວຄວາມຄິດລິເລີ່ມໃໝ່ໆທີ່ຈະນໍາໃຊ້ໃນຊຸມຊົນຄວນມີເປົ້າໝາຍເພື່ອສົ່ງເສີມ ແລະ ສະໜັບສະໜູນຂີດຄວາມສາມາດ ແລະ ຄວາມຄິດລິເລີ່ມຂອງທ້ອງຖິ່ນໂດຍຂະບວນການອໍານວຍຄວາມສະດວກ ແລະ ການສ້າງວິໄສທັດຮ່ວມກັນ. ນີ້ແມ່ນສໍາຄັນຫຼາຍໃນບໍລິບົດຂອງກໍາປູເຈຍເຊິ່ງເປັນປະເທດທີ່ປະຊາຊົນຢູ່ກະຈັດກະຈາຍ ອັນເນື່ອງມາຈາກລະບອບການປົກຄອງແບບກົດຂີ່ ແລະ ສົງຄົມຫຼັງສົງຄາມ.*



ການແບ່ງປັນເລົ່າເລື່ອງຂອງຜູ້ທີ່ຕົກເປັນເຫຍື່ອ ແມ່ນຂະບວນການພັດທະນາຕົວຕົນຂອງກຸ່ມເພື່ອນໍາໄປສູ່ຄວາມຮູ້ສຶກຮ່ວມກັນ, ວິໄສທັດຮ່ວມກັນ ແລະ ຄວາມຊົງຈໍາຮ່ວມກັນ. ແມັກກົວ (McGrew 1999/2000)[1] ກ່າວວ່າຂະບວນເພື່ອອໍານວຍຄວາມສະດວກໃນການເລົ່າເລື່ອງຂອງຄົນກໍາປູເຈຍແມ່ນສໍາຄັນຫຼາຍ - ການເລົ່າເລື່ອງ, ມີຄົນຮັບຟັງ ແລະ ມີຄົນຮັບຮູ້ເລື່ອງຂອງພວກເຂົາແມ່ນບາດກ້າວສໍາຄັນເພື່ອກ້າວເຂົ້າສູ່ຄວາມປອງດອງ ແລະ ການປົວແປງຈິດໃຈ.

ສູນການຮຽນຮູ້ເພື່ອສັນຕິພາບຊຸມຊົນ (CPLC) ເກີດຂຶ້ນຈາກຂະບວນການໃຫ້ຄໍາປຶກສາໂດຍຜ່ານການເລົ່າເລື່ອງ ແລະ ການຮ່ວມມືກັບຊຸມຊົນຂອງຄ້າຍສັງຫານໃນການດໍາເນີນການມີສ່ວນຮ່ວມໃນການພັດທະນາພື້ນທີ່ແຫ່ງຄວາມຊົງຈໍາ. ການມີສ່ວນຮ່ວມນີ້ມີຈຸດປະສົງເພື່ອໃຫ້ສະຖານທີ່ດັ່ງກ່າວເປັນສູນກາງຂອງສໍາລັບການລໍາລຶກເຖິງຄວາມຊົງຈໍາ, ການເລົ່າຄວາມຈິງ, ການປົວແປງ ແລະ ການສ້າງສັນຕິພາບ. ຂະບວນການນີ້ມີຈຸດປະສົງເພື່ອສ້າງພື້ນທີ່ ແລະ ສົ່ງເສີມໃຫ້ປະຊາຊົນໂດຍສະເພາະຜູ້ຖືກເຄາະຮ້າຍໄດ້ສະແດງຕົນອອກມາ ແລະ ເຮັດວຽກຮ່ວມກັນ ເພື່ອໃຫ້ບັນລຸວິໄສທັດ ແລະ ການດໍາເນີນການຮ່ວມກັນ. ພົວພັນກັບພາກສ່ວນກ່ຽວຂ້ອງທີ່ສໍາຄັນເພື່ອສົນທະນາກ່ຽວກັບປັດໄຈ ແລະ ຄວາມຄິດລິເລີ່ມໃນການສ້າງມໍລະດົກແຫ່ງຄວາມຊົງຈໍາໃນຮູບແບບທີ່ສະແດງອອກເຖິງຕົວຕົນຂອງເຂົາເຈົ້າເອງ ແລະ ມີຄວາມໝາຍ.

ນໍາໃຊ້ວິທີການມີສ່ວນຮ່ວມໂດຍຜ່ານເວທີການສົນທະນາ ແລະ ການປຶກສາຫາລື ເຊິ່ງຂະບວນການດັ່ງກ່າວມີຜົນໄດ້ຮັບສອງປະການຄື: ປະຊາຊົນ ແລະ ຊຸມຊົນມີຄວາມມຸ່ງມາດປາຖະໜາໃຫ້ເກີດມໍລະດົກແຫ່ງຄວາມຊົງຈໍາ "ບໍ່ມີອີກແລ້ວ" ການຂ້າລ້າງເຜົ່າພັນ ແລະ ລະບອບການປົກຄອງທີ່ກົດຂີ່; ແລະ ຄວາມເຂົ້າໃຈໃນອະດີດເພື່ອປະເຊີນໜ້າກັບປະຈຸບັນ ແລະ ເພື່ອກໍານົດອະນາຄົດທີ່ດີກວ່າ. ຂະບວນການດັ່ງກ່າວນີ້ແມ່ນມີຄວາມໝາຍຕໍ່ກັບປະຊາຊົນ ແລະ ຊຸມຊົນລວມທັງ:

- ການເປັນຕົວແທນຂອງຊຸມຊົນ ແລະ ຄວາມເປັນຊາດ
- ຈື່ຈໍາປະຊາຊົນຜູ້ທີ່ທຸກທໍລະມານ ແລະ ເສຍຊີວິດ
- ຊຸມຊົນທີ່ມີຊີວິດຊີວາ
- ສັນຍາລັກ ຫຼື ສະຖານທີ່ທີ່ເຄົາລົບບູຊາ, ສະຖານທີ່ສໍາລັບການປົວແປງ, ການຊອກຄົ້ນຄວາມຈິງ, ການຮຽນຮູ້ ແລະ ການກ້າວໄປຂ້າງໜ້າ

1 McGrew is a researcher on the topic of Truth, Justice, Reconciliation, and Peace in Cambodia: 20 Years After the Khmer Rouge, Phnom Penh, December 1999 – February 2000 funded by the Canadian Embassy.

CPLC ຖືກສ້າງຂຶ້ນທີ່ບ່ອນທີ່ເກີດອາດສະຍາກຳ ເຊິ່ງໃນນັ້ນປະກອບດ້ວຍພະພິດຕະພັນ ແລະ ຫ້ອງວາງສະແດງ, ຫ້ອງສຳລັບການສົນທະນາ ແລະ ຫ້ອງສະໝຸດ. CPLC ໄດ້ໃຫ້ທຸກພາກສ່ວນເຂົ້າມາມີສ່ວນຮ່ວມ ໃນຂະບວນການວາງແຜນ, ການກໍ່ສ້າງ ແລະ ການດຳເນີນການ ເພື່ອສ້າງຄວາມອາດສາມາດໃຫ້ປະຊາຊົນໃນຊຸມຊົນ ລວມທັງພາກສ່ວນກ່ຽວຂອງທີ່ສຳຄັນ ເຊັ່ນ: ອຳນາດການປົກຄອງທ້ອງຖິ່ນ, ນັກການສຶກສາ, ຜູ້ນຳທາງສາດສະໜາ, ຜູ້ຖືກເຄາະຮ້າຍ ແລະ ຊາວໜຸ່ມ. ດັ່ງນັ້ນ, CPLC ມີເປົ້າໝາຍເພື່ອໃຫ້ມີຄວາມຍືນຍົງ ແລະການຄຸ້ມຄອງທີ່ດີໃນຂັ້ນທ້ອງຖິ່ນ ແລະ ບໍ່ໃຫ້ເກີດເຫດການທີ່ໂຫດຮ້າຍ ແລະ ການລະເມີດສິດທິມະນຸດຂຶ້ນອີກ.

CPLC ຖືກສ້າງຂຶ້ນເພື່ອໃຫ້ຄົນຮຸ້ນປະຈຸບັນ ແລະ ອະນາຄົດໄດ້ຮຽນຮູ້ຈັກອະດີດ ແລະ ເພື່ອໃຫ້ມີສະຖານທີ່ສຳລັບແບ່ງປັນຄວາມຫຍຸ້ງຍາກ, ໂສກເສົ້າ, ຄວາມຜິດຫວັງ, ປະສົບການ ແລະ ເລື່ອງເລົ່າຕ່າງໆ. CPLC ມີເປົ້າໝາຍ ເພື່ອໃຫ້ຄວາມຊົງຈຳເຫຼົ່ານີ້ຄົງຢູ່ໄປໃນທຸກຮຸ້ນຄົນ. ເປັນສະຖານທີ່ ໃຫ້ທຸກຄົນໄດ້ຮຽນຮູ້, ເຮັດການວິໄຈ, ແບ່ງປັນ ແລະ ແລກປ່ຽນ ແລະ ບອກເລົ່າກ່ຽວກັບປະຫວັດສາດ, ຄວາມຮູ້ຕະຫຼອດຈົນຮອດທັກສະການແກ້ໄຂຂໍ້ຂັດແຍ່ງ, ຄວາມປອງດອງ ແລະ ການສ້າງສັນຕິພາບ.

CPLC ສະໜອງໂອກາດໃນການຮຽນຮູ້ຕະຫຼອດຊີວິດສຳລັບປະຊາຊົນທຸກຄົນ ໂດຍບໍ່ຄຳນຶງເຖິງເພດ, ອາຍຸ, ບ່ອນກຳເນີດ ຫຼື ຄວາມສາມາດ. ພວກເຂົາບໍ່ພຽງແຕ່ໃຫ້ຄວາມສົນໃຈກ່ຽວກັບສັນຕິພາບ ແລະ ຄວາມປອງດອງເທົ່ານັ້ນ ແຕ່ຍັງລວມທັງການພັດທະນາທັກສະ ແລະ ການສຶກສາຂັ້ນພື້ນຖານສຳລັບຊຸມຊົນອ້ອມຂ້າງ.

*ໝາຍເຫດ:* ບົດຄວາມນີ້ແມ່ນສະບັບຫຍໍ້ຂອງບົດລາຍງານການວິໄຈ ຂອງທ່ານ Khet Long ຊຽນຮ່ວມກັບສະຖາບັນແຫ່ງສັນຕິພາບຂອງກຳປູເຈຍ: 'ຜົນກະທົບຂອງການສ້າງຄວາມຊົງຈຳ ແລະ ການສ້າງຄວາມປອງດອງໃນສູນການຮຽນຮູ້ເພື່ອສັນຕິພາບຊຸມຊົນ' ເດືອນພຶດສະພາ 2018, Khet Long & Rancha Keo.





# ວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື

*ຄຳເຫັນຈາກທ່ານ Audrey Azoulay ຜູ້ອຳນວຍການ ອົງການຢູເນສໂກ*
*ເນື່ອງໃນໂອກາດວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື, ວັນທີ 8 ກັນຍາ 2018*

"ເມື່ອທ່ານອ່ານໜັງສືອອກ ທ່ານຈະໄດ້ເປັນອິດສະຫຼະ", ຂຽນໂດຍທ່ານ ເຟເດີຣິກ ດັກລາສ (Frederick Douglass) ຜູ້ທີ່ເປັນອິດສະຫຼະຈາກອິດທິພົນອັນໂຫດຮ້າຍຂອງລະບອບຂ້າທາດ ນັກຕໍ່ສູ້ເພື່ອການເລີກທາດ ແລະ ທັງເປັນຜູ້ຂຽນໜັງສືຈຳນວນຫຼາຍເຫຼັ້ມ ໃນສັດຕະວັດທີ 19. ນີ້ແມ່ນການຮຽກຮ້ອງການປົດປ່ອຍໃຫ້ເປັນອິດສະຫຼະຈາກການເປັນທາດໂດຍການອ່ານ ແລະ ທັກສະການຮູ້ໜັງສື ແລະ ການຄິດໄລ່ຂັ້ນພື້ນຖານ.

ການຮູ້ໜັງສືແມ່ນບາດກ້າວທຳອິດເພື່ອສູ່ຄວາມເປັນອິດສະຫຼະຫຼຸດພົ້ນຈາກຂໍ້ຈຳກັດທາງສັງຄົມ ແລະ ເສດຖະກິດ. ເປັນເງື່ອນໄຂເບື້ອງຕົ້ນສຳລັບການພັດທະນາສະເພາະບຸກຄົນ ແລະ ສ່ວນລວມ. ຫຼຸດພົ້ນຈາກຄວາມທຸກຈົນ ແລະ ຄວາມບໍ່ເທົ່າທຽມກັນ, ສ້າງຄວາມອຸດົມຮັ່ງມີ ແລະ ຊ່ວຍຫຼຸດປັນຫາດ້ານໂພຊະນາການ ແລະ ສາທາລະນະສຸກ.

ນັບຕັ້ງແຕ່ຊ່ວງຊີວິດຂອງທ່ານ ເຟເດີຣິກ ດັກລາສ ໂດຍສະເພາະໃນໄລຍະຫຼາຍທົດສະວັດຜ່ານມາ ໄດ້ມີຄວາມກ້າວໜ້າເກີດຂຶ້ນຫຼາຍຢ່າງທົ່ວທຸກພາກພື້ນທົ່ວໂລກ ໄດ້ມີຍິງ-ຊາຍ ຫຼາຍລ້ານຄົນທີ່ຫຼຸດພົ້ນຈາກຄວາມບໍ່ຮູ້ ແລະ ສະພາບການເອື່ອຍອີງ ໂດຍມີການເຄື່ອນໄຫວຢ່າງກວ້າງຂວາງກ່ຽວກັບການຮູ້ໜັງສື ແລະ ຄວາມເປັນປະຊາທິປະໄຕໃນການເຂົ້າເຖິງການສຶກສາ. ເຖິງຢ່າງໃດກໍຕາມ, ການຄາດການຂອງໂລກທີ່ທຸກຄົນມີຄວາມຮູ້ພື້ນຖານຍັງຄົງເປັນພຽງແຕ່ອຸດົມຄະຕິ.

ປະຈຸບັນມີເດັກນ້ອຍ ແລະ ຊາວໜຸ່ມຈຳນວນ 260 ລ້ານຄົນທົ່ວໂລກທີ່ບໍ່ໄດ້ເຂົ້າໂຮງຮຽນ; ເດັກນ້ອຍ ແລະ ຊາວໜຸ່ມ 6 ໃນ 10 ຄົນ ຫຼື ປະມານ 617 ລ້ານຄົນບໍ່ມີທັກສະຂັ້ນຕົ້ນໃນການຮູ້ໜັງສື ແລະ ການຄິດໄລ່; 750 ລ້ານຄົນຍັງບໍ່ສາມາດອ່ານອອກຂຽນໄດ້ ແລະ 2 ໃນ 3 ຄົນຂອງຈຳນວນດັ່ງກ່າວແມ່ນເປັນເພດຍິງ. ຂໍ້ຄົງຄ້າງເຫຼົ່ານີ້ແມ່ນນຳໄປສູ່ການແຍກຕົວອອກຈາກສັງຄົມ ແລະ ນຳໄປສູ່ບັນຫາຄວາມບໍ່ເທົ່າທຽມກັນໃນສັງຄົມ ແລະ ຄວາມບໍ່ເທົ່າທຽມທາງເພດ.

ສິ່ງທ້າທາຍໃໝ່ທີ່ກຳລັງເກີດຂຶ້ນຕໍ່ໂລກໃບນີ້ຄື: ນະວັດຕະກຳເຕັກໂນໂລຊີໄດ້ກ້າວເຂົ້າມາຢ່າງໄວວາ ແລະ ຕໍ່ເນື່ອງ. ເພື່ອເປັນການຫາໂອກາດໃນສັງຄົມ, ການມີວຽກເຮັດງານທຳ ແລະ ຕອບສະໜອງຕໍ່ຄວາມທ້າທາຍທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ, ການຮຽນຮູ້ໜັງສື ແລະ ການຄິດໄລ່ຮູບແບບເດີມແມ່ນຍັງບໍ່ພຽງພໍ; ທັກສະໃໝ່ໆ ລວມທັງທັກສະເຕັກໂນໂລຊີກ່ຽວກັບຂໍ້ມູນຂ່າວສານ ແລະ ແລະ ການສື່ສານ ເຊິ່ງໄດ້ກາຍມາເປັນສິ່ງຈຳເປັນເພີ່ມຂຶ້ນເລື້ອຍໆ.

ການກຽມຄວາມພ້ອມໃຫ້ຊາວໜຸ່ມ ແລະ ຜູ້ໃຫຍ່ເພື່ອໃຫ້ມີວຽກເຮັດງານທຳ ເຊິ່ງພວກເຂົາສ່ວນຫຼາຍແລ້ວແມ່ນຍັງບໍ່ມີທັກສະດັ່ງກ່າວນີ້ຈຶ່ງເປັນສິ່ງທ້າທາຍອີກຢ່າງໜຶ່ງ. ດັ່ງນັ້ນ, ມັນຈຳເປັນທີ່ຈະຕ້ອງເຂົ້າເຖິງການຮຽນຮູ້ຕະຫຼອດຊີວິດ, ການໄດ້ຮັບຜົນປະໂຫຍດຈາກແນວທາງການຝຶກອົບຮົມໃນຮູບແບບຕ່າງໆ ແລະ ການໄດ້ຮັບໂອກາດຫຼາຍຂຶ້ນທັງໝົດເພື່ອເປັນການກຽມພ້ອມຮັບມືກັບສິ່ງທ້າທາຍດັ່ງກ່າວ.

ຫົວຂໍ້ຂອງວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື ສຳລັບປີນີ້ແມ່ນ "ການຮູ້ໜັງສື ແລະ ການພັດທະນາທັກສະ", ທີ່ມຸ່ງເນັ້ນແນວທາງໃນການພັດທະນາການສຶກສາ. ຢູເນສໂກກຳລັງມີສ່ວນຮ່ວມຢ່າງເຂັ້ມຂຸ້ນໃນການກຳນົດນິຍາມໃໝ່ຂອງນະໂຍບາຍການຮຽນຮູ້ໜັງສື ແລະ ສົ່ງເສີມການປະຕິບັດກ່ຽວກັບນະວັດຕະກຳການສຶກສາ. ລວມທັງການສົ່ງເສີມການຮ່ວມມືໃນຮູບແບບຕ່າງໆ ທັງພາກລັດ ແລະ ເອກະຊົນ, ເນື່ອງຈາກມີຄວາມເຂົ້າໃຈກ່ຽວກັບການສຶກສາພຽງແຕ່ໄດ້ຍອມຮັບເທົ່ານັ້ນ ຈຶ່ງຈະສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງໂລກໄດ້ຢ່າງເໝາະສົມ ນັ້ນກໍໝາຍຄວາມວ່າການສຶກສາຈະຕ້ອງໄດ້ປະຕິຮູບຕົນເອງຢູ່ທຸກມື້.

ເນື່ອງໃນໂອກາດວັນສາກົນແຫ່ງການລຶບລ້າງຄວາມບໍ່ຮູ້ໜັງສື ຂ້າພະເຈົ້າຂໍຮຽກຮ້ອງໃຫ້ທຸກຝ່າຍໃນຂົງເຂດການສຶກສາ ແລະ ພາກສ່ວນອື່ນໆ ນີ້ແມ່ນສິ່ງທີ່ກ່ຽວຂ້ອງກັບພວກເຮົາທຸກຄົນ ພວກເຮົາຈົ່ງຊ່ວຍກັນຂັບເຄື່ອນ ເພື່ອໃຫ້ອຸດົມຄະຕິຂອງສັງຄົມໂລກໃນດ້ານການຮຽນຮູ້ໜັງສືໃຫ້ເກີດຜົນເປັນຈິງໃນທຸກໆວັນ.



# ເຄື່ອງມືສຳລັບນັກການສຶກສາ ແລະ ຄູຝຶກການສຶກສານອກໂຮງຮຽນໃນພາສາລາວ

*ເບຄຳ ສະເຫຼີມສຸກ*, ດີວີວີ ອິນເຕີເນເຊີນແນວ ລາວ

**ຫ້ອງການ ດີວີວີ ອິນເຕີເເຊີນແນວ ໄດ້ຈັດພິມປື້ມຄູ່ມືເຫຼັ້ມໃຫມ່ ສຳລັບຄູຝຶກການສຶກສານອກໂຮງຮຽນ ເພື່ອສະໜັບສະໜູນໃຫ້ມີສື່ສຳລັບການຝຶກອົບຮົມທີ່ເໝາະສົມກັບບໍລິບົດ.**

ການສຶກສາຜູ້ໃຫຍ່ແມ່ນແນວຄິດໃໝ່ສຳລັບ ສປປ ລາວ. ດັ່ງນັ້ນ ຜູ້ປະຕິບັດງານໃນທ້ອງຖິ່ນ ລວມທັງສື່ສຳລັບການຝຶກອົບຮົມໃນພາສາທ້ອງຖິ່ນແມ່ນຍັງມີຈຳກັດ. ເພື່ອເປັນການແກ້ໄຂບັນຫາດັ່ງກ່າວ ດີວີວີ ອິນເຕີເນເຊີນແນວ ແລະ ກົມການສຶກສານອກໂຮງຮຽນ, ກະຊວງສຶກສາທິການ ແລະ ກິລາ ໄດ້ຮ່ວມມືກັນພັດທະນາ ແລະ ຈັດຕັ້ງປະຕິບັດໂຄງການການຝຶກອົບຮົມຄູຝຶກຫຼັກ (ToMT). ມັນເປັນການສ້າງຂີດຄວາມອາດສາມາດໃຫ້ແກ່ນັກການສຶກສານອກໂຮງຮຽນຈຳນວນ 40 ທ່ານ ຈາກທົ່ວປະເທດເພື່ອມາຝຶກອົບຮົມກ່ຽວກັບການສອນຜູ້ໃຫຍ່ໃນຂະແໜງການສຶກສານອກໂຮງຮຽນໃນສປປລາວ. ເຊິ່ງວົງຈອນການຝຶກອົບຮົມແມ່ນຢູ່ບົນພື້ນຖານຂອງຫຼັກສູດ ໂກລບາລີ (globALE) ເຊິ່ງໃຊ້ເວລາສອງປີໃນການຝຶກ.

ກ່ຽວກັບການຂາດສື່ສຳລັບການຝຶກອົບຮົມທີ່ເປັນພາສາທ້ອງຖິ່ນ, ດີວີວີ ໄດ້ພັດທະນາປື້ມຄູ່ມືໃໝ່ສຳລັບຄູຝຶກການສຶກສານອກໂຮງຮຽນ. ເຊິ່ງສື່ສຳລັບການຝຶກອົບຮົມສ່ວນຫຼາຍລ້ວນແລ້ວແຕ່ເປັນພາສາອັງກິດ ແລະ ວິທີການຝຶກອົບຮົມນັ້ນກໍບໍ່ສາມາດນຳໃຊ້ໄດ້ໃນບໍລິບົດທ້ອງຖິ່ນ. ດັ້ງນັ້ນ, ພາຍຫຼັງການຝຶກອົບຮົມຄັ້ງທີສາມ ບັນດາຄູຝຶກ ໄດ້ເຮັດການສຳຫຼວດກ່ຽວກັບຄວາມຕ້ອງການສື່ສຳລັບການຝຶກອົບຮົມ. ທ່ານນາງເບຄຳ ສະເຫຼີມສຸກ ຜູ້ບໍລິຫານໂຄງການ ToMT ແລະ ທ່ານ ສຸພາບ ຄູນວິໄຊ ຫົວໜ້າຂະແໜງພັດທະນາຫຼັກສູດ, ສູນພັດທະນາການສຶກສານອກໂຮງຮຽນ ໄດ້ລວບລວມ ເນື້ອໃນຈາກຫຼາຍແຫຼ່ງ ແລະ ໄດ້ແປເປັນພາສາລາວ. ປື້ມຄູ່ມືດັ່ງກ່າວແມ່ນແຈກຢາຍຟຣີ ເຊິ່ງເຂົ້າໄປດາວໂຫຼດໄດ້ທີ່ເວັບໄຊ DVV Iternational ແລະ ປື້ມຄູ່ມືດັ່ງກ່າວບໍ່ສະເພາະແຕ່ສຳລັບຄູຝຶກການສຶກສານອກໂຮງຮຽນ ແຕ່ທຸກໆ ພາກສ່ວນທີ່ມີຄວາມສົນໃຈແມ່ນສາມາດນຳໃຊ້ໄດ້.




ໃນປື້ມຄູ່ມືເຫຼັ້ມນີ້ປະກອບດ້ວຍ:

- ພາກທີ່ 1: 3 ລັກສະນະ ແລະ 5 ຫຼັກມູນ
- ພາກທີ່ 2: ການຮຽນຮູ້ຕະຫຼອດຊີວິດ
- ພາກທີ່ 3: ເຕັກນິກວິທີການສອນຜູ້ໃຫຍ່, ການສື່ສານ ແລະ ການເຮັດວຽກເປັນກຸ່ມ
- ພາກທີ່ 4: ການສ້າງແຜນການຝຶກອົບຮົມ
- ພາກທີ່ 5: ທິດສະດີການຮຽນຮູ້ໂດຍຜ່ານປະສົບການ
- ພາກທີ່ 6: ການອຳນວຍຄວາມສະດວກທີ່ມີປະສິດທິຜົນ
- ພາກທີ່ 7: ຊຸມຊົນແຫ່ງການປະຕິບັດ

ໃນແຕ່ລະພາກຈະມີເນື້ອໃນທີ່ແຕກຕ່າງກັນ ເລີ່ມຈາກພາກທິດສະດີໄປຈົນເຖິງພາກປະຕິບັດພ້ອມທັງຄຳອະທິບາຍ ແລະ ຄຳແນະນຳກ່ຽວກັບກິດຈະກຳທີ່ສາມາດນຳໄປໃຊ້ໃນການຈັດຝຶກອົບຮົມ. ທີມງານຄູຝຶກຫຼັກແມ່ນຄຸ້ນເຄີຍກັບເນື້ອໃນສ່ວນຫຼາຍແລ້ວ ເນື່ອງຈາກວ່າພວກເຂົາມີສ່ວນຮ່ວມໃນບັນດາກິດຈະກຳຕ່າງໆ ໂດຍຜ່ານການຝຶກອົບຮົມຂອງເຂົາເຈົ້າເອງ ແລະ ປື້ມຄູ່ມືນີ້ແມ່ນເປັນພື້ນຖານສຳລັບການອອກແບບຝຶກອົບຮົມ. ນອກນີ້ຍັງຖືກນຳໃຊ້ຢູ່ໃນວິທະຍາໄລຄູ ລວມທັງຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດລາວ ແລະ ຊ່ວຍສົ່ງເສີມໃຫ້ຮູ້ເຖິງຄວາມໝາຍ ຄວາມສຳຄັນຂອງການສຶກາຜູ້ໃຫຍ່ ແລະ ການສຶກສານອກໂຮງຮຽນໃນ ສປປ ລາວ.

*ດາວໂຫຼດຄູ່ມືໄດ້ທີ່*
www.dvv-international.la

# ຄວາມຕ້ອງການໃນການຝຶກອົບຮົມທັກສະນອກໂຮງຮຽນ

*ອູເວ ກາກເຕິນສະແລເກີ, ດີວີວີ ອິນເຕີເນເຊີນແນວ ລາວ*

*ສາຍພົວພັນລະຫວ່າງ ຂະແໜງການສຶກສານອກໂຮງຮຽນ (ກສນ) ແລະ ເຕັກນິກ ແລະ ອາຊີວະສຶກສາ (TVET) ບໍ່ແມ່ນເລື່ອງງ່າຍທີ່ຈະເຂົ້າໃຈ ແລະ ມັນເຕັມໄປດ້ວຍຄວາມເຄັ່ງຕຶງ ແລະ ຄວາມບໍ່ເຂົ້າໃຈກັນ. ດ້ວຍການຮ່ວມມືກັນ, ເຖິງຢ່າງໃດກໍຕາມ ພວກເຂົາສາມາດສ້າງຄວາມແຕກຕ່າງທີ່ແທ້ຈິງໃຫ້ແກ່ການຝຶກອົບຮົມນອກໂຮງຮຽນໄດ້.*

ຈາກທັດສະນະຂອງຜູ້ຊ່ຽວຊານໃນວຽກງານ TVET, ກສນ ສາມາດຖືກປ່ອຍປະລະເລີຍໄດ້, ໃນກໍລະນີສ່ວນຫຼາຍການຝຶກອົບຮົມນີ້ມັນບໍ່ໄດ້ນຳໄປສູ່ການການມີອາຊີບ ທີ່ມີລະດັບຄວາມສາມາດພຽງພໍທີ່ຕະຫຼາດແຮງງານຕ້ອງການ. ສິ່ງເສີມ ກສນ,ໃນທາງກົງກັນຂ້າມ, ຂະແໜງ TVET ຈະສຸມໃສ່ສະເພາະຄວາມຕ້ອງການທາງດ້ານເສດຖະກິດ (ຕະຫຼາດແຮງງານ) ໂດຍບໍ່ສົນໃຈເປົ້າໝາຍ ແລະ ຄວາມຕ້ອງການຂອງປະຊາຊົນ. ພວກເຂົາທ້າທາຍ, ຄວາມຄິດຂອງພວກເຂົາ, ແນວຄິດທີ່ບໍ່ກວ້າງຂວາງກ່ຽວກັບທັກສະ, ຄວາມສາມາດ ແລະ ຄວາມຮູ້ທີ່ນຳໃຊ້ໃນ TVET, ແລະ ການເນັ້ນໃຫ້ເຫັນຄວາມສຳຄັນຂອງແນວຄວາມຄິດເຊິ່ງເປັນທີ່ຍອມຮັບວ່າເປັນທັກສະຊີວິດ, ຄວາມສາມາດໃນການປັບປ່ຽນ ຫຼື ລວມໄປເຖິງການສຶກສາຂັ້ນພື້ນຖານ.

ຈຸດປະສົງຂອງ “ບໍ່ປ່ອຍປະຜູ້ໃດໄວ້ທາງຫຼັງ”[1] ສະໜັບສະໜູນໃຫ້ທຸກພາກສ່ວນສະທ້ອນໃຫ້ເຫັນບັນຫາເຫຼົ່ານີ້:

- ເຮົາຈະແນ່ໃຈໄດ້ແນວໃດ ວ່າການຝຶກອົບຮົມ ແລະ ການສຶກສາວິຊາຊີບນັ້ນສາມາດເຂົ້າເຖິງກຸ່ມຄົນດ້ອຍໂອກາດ?
- ເຮົາຈະແນ່ໃຈໄດ້ແນວໃດ ວ່າໂອກາດສຳລັບການຮຽນຮູ້ນັ້ນ ຕອບສະໜອງຕໍ່ຄວາມຕ້ອງການດ້ານເສດຖະກິດ ແລະ ປັບປຸງການດຳລົງຊີວິດຂອງກຸ່ມຄົນດ້ອຍໂອກາດ?
- ເຮົາຈະມີວິທີແນວໃດ ໃນການນຳໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຈຳກັດໃຫ້ເກີດປະສິດທິພາບສູງສຸດ?

## ຄວາມຫຼາກຫຼາຍ ແລະ ການກະຈາຍຂອງການຝຶກອົບຮົມທັກສະໃນວຽກງານ ກສນ

ຄຸນລັກສະນະໜຶ່ງຂອງການຝຶກອົບຮົມທັກສະນອກໂຮງຮຽນແມ່ຄວາມຫຼາກຫຼາຍຂອງບັນດາພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ແລະ ຮູບແບບຕ່າງທີ່ນຳໃຊ້. ໃນກໍລະນີຂອງ ສປປ ລາວ, ເຊິ່ງເປັນປະເທດທີ່ມີສະຖາບັນການສຶກສາບໍ່ຫຼາຍ ແຕ່ຢ່າງນ້ອຍສະຖາບັນດັ່ງຕໍ່ໄປນີ້ກໍໄດ້ປະກອບສ່ວນຢ່າງມີຄວາມໝາຍສຳຄັນ:

- ກົມການສຶກສານອກໂຮງຮຽນ, ກະຊວງສຶກສາທິການ ແລະ ກິລາ
- ໂຮງຮຽນວິຊາຊີບແບບປະສົມ ທີ່ຢູ່ໃນລະບົບ ຂອງ ກົມອາຊີວະສຶກສາ, ກະຊງສຶກສາທິການ ແລະ ກິລາ
- ສູນຝຶກອົບຮົມທັກສະວິຊາຊີບ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
- ສູນຝຶກອົບຮົມວິຊາຊີບ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ
- ສູນຝຶກອົບຮົມແມ່ຍິງລາວ, ສະຫະພັນແມ່ຍິງ
- ບັນດາກະຊວງຕ່າງໆ ທີ່ສະໜອງການຝຶກອົບຮົມວິຊາຊີບທີ່ກ່ຽວຂ້ອງກັບຂະແໜງການເຊັ່ນ: ກະຊວງສາທາລະນະສຸກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ.
- ນອກນັ້ນ ຍັງມີບັນດາສະມາຄົມ ແລະ ໂຄງການຕ່າງໆ ທີ່ລວມເອົາການຝຶກອົບຮົມທັກສະເຂົ້າໃນກິດຈະກຳຂອງເຂົາເຈົ້າເຊັ່ນ: ສູນພັດທະນາແມ່ຍິງພິການລາວ ແລະ ສູນຜູ້ປະກອບການແມ່ຍິງ.

ຄວາມຫຼາກຫຼາຍນີ້ມີທ່າອ່ຽງ ແລະ ພຽງພໍສຳລັບຂະແໜງການສຶກສານອກໂຮງຮຽນ. ດ້ວຍເຫດຜົນຕ່າງໆ ທີ່ກ່າວມາແມ່ນ ກສນ ໄດ້ພິຈາລະນາຄວາມຕ້ອງການຂອງກຸ່ມເປົ້າໝາຍ ແລະ ຕອບສະໜອງຄວາມຕ້ອງການໂດຍກົງ. ແລະ ຄວາມຕ້ອງການເຫຼົ່ານັ້ນແມ່ນຫຼາກຫຼາຍ ແລະ ການຕອງສະໜອງຄວາມຕ້ອງການກໍເຊັ່ນກັນ.



1 *“Ensuring that no one is left behind” was the theme of the 2016 UN High Level Political Forum on Sustainable Development*

## ຂໍ້ສະເໜີສຳລັບປັບປຸງ

*1. ຄວາມຫຼາກຫຼາຍ ແລະ ເຄືອຂ່າຍ, ການບໍ່ຮ່ວມກັນ*

ສະຖານະການຕ້ອງເນັ້ນໄປທີ່ການປັບປຸງຄວາມຮ່ວມມືຂອງພາກສ່ວນກ່ຽວຂ້ອງທີ່ແຕກຕ່າງກັນ. ເນື່ອງຈາກວ່າບໍ່ໄດ້ແນະນຳ ຫຼື ພາກສ່ວນກ່ຽວຂ້ອງທີ່ມີຈຳນວນຈຳກັດ, ມັນອາດຈະເປັນປະໂຫຍດໃນການຫາເຄືອຂ່າຍ ແລະ ການເຮັດວຽກຮ່ວມກັນລະຫວ່າງບັນດາພາກສ່ວນກ່ຽວຂ້ອງ. ຍຸດທະສາດນີ້ແມ່ນບົດຮຽນຈາກຫຼາຍປະເທດທີ່ມີຄວາມພະຍາຍາມຄ້າຍຄືກັນເຊິ່ງພິສູດມາແລ້ວວ່າມັນປະສົບຜົນສຳເລັດ ເຊັ່ນ: ປະເທດຫວຽດນາມໄດ້ເລືອກແນວທາງໃນການພັດທະນາແນວຄວາມຄິດສັງຄົມແຫ່ງການຮຽນຮູ້ ນຳພາພາກສ່ວນທີ່ກ່ຽວຂ້ອງມາຮ່ວມມືກັນ.[2]

ນີ້ລວມທັງອີງການທີ່ສ້າງຕັ້ງໜ່ວຍງານຮັບຜິດຊອບໃນເຄືອຂ່າຍ ແລະ ການເຊື່ອມຕໍ່ພາກສ່ວນກ່ຽວຂ້ອງກັບການຝຶກອົບຮົມທັກສະໃນໂຮງຮຽນ ແລະ ນອກໂຮງຮຽນ. ໜ້າວຽກຂອງອົງກອນມີດັ່ງນີ້:

- ການປະເມີນຄວາມຕ້ອງການຂອງທັກສະນອກໂຮງຮຽນຢ່າງເປັນປົກກະຕິ
- ພັດທະນາ ແລະ ສົ່ງເສີມລະບົບການຍອມຮັບ, ການຢືນຢັນ ແລະ ການຮັບຮູ້
- ສະເໜີໃຫ້ມີການປະຊຸມແລກປ່ຽນ ແລະ ຮຽນຮູ້ຂອງບັນດາພາກສ່ວນທີ່ກ່ຽວຂ້ອງ
- ອຳນວຍຄວາມສະດວກໃນການແລກປ່ຽນຊັບພະຍາກອນ (ປຶ້ມແບບຮຽນ, ຫຼັກສູດ)

ຕ້ອງໝັ້ນໃຈວ່າໜ່ວຍງານເຄືອຂ່າຍນັ້ນເປີດກວ້າງສຳລັບທຸກພາກສ່ວນ ແລະ ທ້າທາຍຍິ່ງໄປກວ່ານັ້ນຄືບັນດາພາກສ່ວນກ່ຽວຂ້ອງເປັນເຄື່ອງມືສະໜັບສະໜູນ ແລະ ເປັນປະໂຫຍດ.

*2. ການແລກປ່ຽນຊັບພະຍາກອນ*

ເປັນທີ່ເຂົ້າໃຈວ່າຊັບພະຍາກອນມະນຸດ ລວມທັງບັນດາອຸປະກອນ, ສະຖານທີ່ການຮຽນຮູ້ ແລະ ງົບປະມານນັ້ນແມ່ນມີຈຳກັດ. ພາກສ່ວນກ່ຽວຂ້ອງຄວນຄຳນຶງເຖິງການນຳໃຊ້ຊັບພະຍາກອນທີ່ມີຢູ່ນັ້ນ ຢ່າງສ້າງສັນ. ທາງເລືອກໜຶ່ງຄືການເປີດໂຮງຮຽນ TVET ແລະ IVET ສຳລັບກິດຈະກຳນອກໂຮງຮຽນໃນຕອນແລງ, ໃນທ້າຍອາທິດ ແລະ ໃນວັນພັກ. ມີຫຼາຍກໍລະນີທີ່ຜູ້ຮຽນຜູ້ໃຫຍ່ສາມາດເຂົ້າຮ່ວມກິດຈະກຳໄດ້ໂດຍອີງຕາມເວລາຂອງເຂົາເຈົ້າ. ຄວາມເປັນໄປໄດ້ອີກຢາງໜຶ່ງຄືການນຳໃຊ້ຊັບພະຍາກອນໃນກອງປະຊຸມດ້ານວິຊາການ. ຄູສອນ ລວມທັງຄູຝຶກ TVET ສາມາດສົ່ງໄປຝຶກສອນໃນໝູ່ບ້ານ ຫຼື ສູນ ກສນ ດີດັ່ງທີ່ໄດ້ກ່າວມາແລ້ວໃນເບື້ອງຕົ້ນ.

*3. ການຝຶກອົບຮົມ ແລະ ການສະໜັບສະໜູນສຳລັບຄູ ແລະ ຜູ້ບໍລິຫານ*

ສິ່ງທີ່ຍັງບໍ່ພຽງພໍຄືອົງປະກອບຂອງການຝຶກອົບຮົມກ່ອນ ແລະ ໃນລະຫວ່າງການຝຶກສຳລັບຄູສອນ TVET, ພວກເຂົາກໍຕ້ອງການ ແລະ ຕ້ອງໄດ້ສຳເລັດການຝຶກອົມຮົມທັກສະນອກໂຮງຮຽນ. ນອກຈາກນີ້, ຜູ້ອຳນວຍການ ແລະ ຜູ້ບໍລິຫານຄວນໄດ້ຮັບການຝຶກອົບຮົມໃນຫົວຂໍ້ໃດໜຶ່ງທີ່ສະເພາະເຈາະຈົງສຳລັບ ກສນ ເຊັ່ນ: ການປະເມີນຄວາມຕ້ອງການ, ສ້າງສ້າງເຄືອຂ່າຍ ແລະ ການລະດົມທຶນ.

*4. ລວມເອົາ ກສນ ເຂົ້າໃນໂຄງການພັດທະນາຂອງຄູ່ຮ່ວມພັດທະນາ*

ເນື່ອງຈາກວ່າຫຼາຍໆ ໂຄງການພັດທະນາ ໃນຂະແໜງ TVET ແມ່ນມີເປົ້າໝາຍເພື່ອຫຼຸດຜ່ອນຄວາມທຸກຈົນ ແລະ ການເຂົ້າເຖິງກຸ່ມຄົນດ້ອຍໂອກາດ ກສນ ຖືເປັນເຄື່ອງມືທີ່ສຳຄັນໃນການຕອບສະໜອງຕໍ່ກັບຄວາມຕ້ອງການດັ່ງກ່າວ.

*5. ຄວາມມຸ່ງມາດປາຖະໜາທີ່ຈະແຈ້ງຈາກລັດຖະບານ ລວມທັງງົບປະມານທີ່ຕ້ອງການ*

ການເພີ່ມທັກສະການຝຶກອົບຮົມໃຫ້ແກ່ ກສນ ແມ່ນມີຄວາມຕ້ອງການຫຼາຍແຕ່ພ້ອມກັນນັ້ນກໍມຄວາມຕ້ອງການໃນການຈັດສັນງົບປະມານຈາກລັດຖະບານເຊັ່ນດຽວກັນ. ໃນປະຈຸບັນງົບປະມານຂອງຂະແໜງ ກສນ ໃນຫຼາຍປະເທດແມ່ນຍັງມີພຽງແຕ່ 1% ຂອງງົບປະມານການສຶກສາທັງໝົດ ເຊິ່ງບໍ່ສາມາດນຳໄປສູ່ການດຳເນີນການທີ່ສຳຄັນ ແລະ ບໍ່ອະນຸຍາດໃຫ້ຂະແໜງ ກສນ ພິສູດວ່າມັນມີຜົນກະທົບ.

*ໝາຍເຫດ: ນີ້ແມ່ນບົດຄັດຫຍໍ້ມາຈາກບົດຄວາມຂອງທ່ານ ອູເວ ກາກເຕີນສະແລເກີໃນປຶ້ມ: Rethinking Adult Education - Asian Perspectives, Bonn 2019.*

2 *http://uil.unesco.org/document/vietnam-framework-building-learning-society-period-2012-2020-issued-2013*

# ກິດຈະກຳໃນສູນຂໍ້ມູນຂ່າວສານ, ສູນພັດທະນາການສຶກສານອກໂຮງຮຽນ

*ສິມຈິດ ພອນວິໄລ*, ສູນພັດທະນາການສຶກສານອກໂຮງຮຽນ

ເພື່ອເປັນການສ້າງ ແລະ ພັດທະນາວຽກງານການເຜີຍແຜ່ຂໍ້ມູນຂ່າວສານການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດ ທາງສູນຂໍ້ມູນຂ່າວສານ (Resource Center) ຂອງສູນພັດທະນາການສຶກສານອກໂຮງຮຽນໄດ້ເອົາໃຈໃສ່ປະຕິບັດຕາມແຜນກິດຈະກຳປີ2018ຂອງສູນຂໍ້ມູນຂ່າວສານ ສະບັບເລກທີ 073/ສພນ, ລົງວັນທີ 12 ມີນາ 2018 ເຊິ່ງໃນໄລຍະ 3 ເດືອນຜ່ານມານີ້ທາງສູນໄດ້ສຳເລັດຫຼາຍກິດຈະກຳດັ່ງນີ້:

1. ສຳເລັດກິດຈະກຳນອກໂມງຮຽນຂອງສູນຂໍ້ມູນຂ່າວສານ ສຳລັບນັກຮຽນພາສາອັງກິດຂັ້ນພື້ນຖານ
2. ສຳເລັດການສ້າງ ແຜ່ນພັບເພື່ອເຜີຍແຜ່ໂຄສະນາກິດຈະກຳຂອງສູນຂໍ້ມູນຂ່າວສານ.
3. ສຳເລັດການສ້າງຈົດໝາຍຂ່າວຂອງສູນພັດທະນາການສຶກສານອກໂຮງຮຽນ ເພື່ອເປັນສື່ໃນການເຜີຍແຜ່ກິດຈະກຳຕ່າງໆຂອງ ສພນ.
4. ໄດ້ລົງສຳຫຼວດສູນ ກສນ ພາກໃຕ້ ແລະ ພາກເໜືອຮ່ວມກັບວິຊາການຈາກອົງການ DVV International ເພື່ອສຶກສາເບິ່ງຄວາມເປັນໄປໄດ້, ຄວາມພ້ອມໃນການສ້າງຕັ້ງສູນຂໍ້ມູນຂ່າວສານຂອງສູນພາກ ເພື່ອວາງແຜນຄວາມຕ້ອງການ ແລະ ແຜນການຝຶກອົບຮົມການສ້າງເວັບໄຊ້ເພື່ອເປັນບ່ອນເຜີຍແຜ່ຂໍ້ມູນແບບສື່ດິຈິຕອນ ໃຫ້ແກ່ພະນັກງານວິຊາການທີ່ຈະຮັບຜິດຊອບວຽກງານສູນຂໍ້ມູນຂ່າວສານຂອງພາກ.

ນອກຈາກນີ້ທາງສູນຂໍ້ມູນຂ່າວສານຍັງໄດ້ເອົາໃຈໃສ່ໃນການສ້າງຂີດຄວາມສາມາດທາງດ້ານການຄຸ້ມຄອງ-ບໍລິຫານວຽກງານຫໍສະໝຸດເຊິ່ງເປັນບ່ອນເກັບກຳຂໍ້ມູນຂ່າວສານຕ່າງໆ ທີ່ເປັນປະໂຫຍດຢ່າງຫຼວງຫຼາຍສຳລັບພະນັກງານທີ່ເຮັດວຽກໃນສາຍ ກສນ, ນັກຮຽນ-ນັກສຶກສາ ແລະ ກຸ່ມຄົນທົ່ວໄປທີ່ສົນໃຈ ໂດຍໄດ້ເຊີນວິທະຍາກອນຈາກຫໍສະໝຸດກາງ ມະຫາວິທະຍາໄລແຫ່ງຊາດ ແລະ ຈາກຫໍສະໝຸດ ແຂວງວຽງຈັນມາຝຶກໃຫ້ເປັນໄລຍະເວລາ 5 ວັນ ທີ່ ຫໍສະໝຸດກາງແຂວງວຽງຈັນ ແລະ ປັດຈຸບັນນີ້ແມ່ນກຳລັງກະກຽມການຝຶກອົບຮົມສ້າງຂີດຄວາມສາມາດດ້ານການສ້າງ ແລະ ພັດທະນາເວັບໄຊ້ໃຫ້ກັບພະນັກງານວິຊາການທີ່ຮັບຜິດຊອບວຽກງານສູນຂໍ້ມູນຂ່າວສານສູນພາກໃຕ້ ແຂວງຈຳປາສັກ ໃນລະຫວ່າງວັນທີ 29 ຕຸລາ-02 ພະຈິກ 2018.





**ສິ່ງທີ່ໜ້າສົນໃຈ**

ເວັບໄຊສຳຄັນໃນພາກພື້ນ

www.aspbae.org

www.pria.org

www.seameocelll.org

**ສິ່ງພິມທີ່ໜ້າສົນໃຈ**

Adult Education and Development

AED 85: Role and Impact of Adult Education

AED 84: Inclusion and Diversity

AED 83: Skills and Competencies

AED 82: Global Citizenship Education

**ທັດສະນະນາໆຊາດ ໃນວຽກງານການສຶກສາຜູ້ໃຫຍ່**

IPE 78: Adult education as a key to development - challenges and success factors

IPE 76: Refugees: A challenge for adult education

IPE 75: Agenda - 2030 - Education and Lifelong Learning in the Sustainable Development Goals

IPE 74: 21th Century Mass Graves - Proceeding of the International Conference Tbilisi, Georgia

ຈັດພິມໂດຍ ດີວີວີ ອິນເຕີເນເຊິນແນວ
ຮ່ວມກັບຄູ່ຮ່ວມພັດທະນາໃນ ສປປ ລາວ, ກຳປູເຈຍ ແລະ
ໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້

ກອງບັນນາທິການ: ປ.ອ. ກ້າ ສະເຫຼີມສຸກ, ພິລານີ ພິດສະໄໝ,
ອຸ່ນເພັງ ຄຳມັງ, ຂັນທອງ ອິນທະຈັກ
ທີມງານບັນນາທິການ: ດາລຸນີ ສີສຸລາດ, ຣາຟາເອລາ ເຣສ,
ດອກຄຳ ຊົມສີຫາປັນຍາ, ສົມໃຈ ແກ້ວເມກ
ບັນນາທິການ: ອູເວີ ກາກເຕິນສະແລເກີ

**ຈົດໝາຍຂ່າວ ໃນພາກພື້ນ**

The ASPBAE Bulletin access via www.aspbae.org

NEXUS - access via www.uil.unesco.org

Voice Rising - access via www.icae2.org

Education Policy Matters - via www.unescobkk.org

**ສິ່ງພິມໃໝ່**

**Handbook for NFE Facilitators**

**Soft Skills** Training Manual for Falicitator

**Soft Skills** Instructional Package

**Curriculum globALE** in Lao language

**Compendium of the CLC Development**

**Lifelong Learning in Transformation**: Promissing Practices in Southeast Asia in Lao language

**DVV International Impact Report 2009-2015**

ດີວີວີ ອິນເຕີເນເຊິນແນວ
ຫ້ອງການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la

# Education for Everyone. Worldwide. Lifelong.